# ແຈ້ງການພໍ່ແມ່ກ່ຽວກັບ ມາດຕະການຄຸ້ມຄອງ

ຮຽນພໍ່ແມ່:

ທ່ານໄດ້ຮັບແຈ້ງການ ກ່ຽວກັບມາດຕະການຄຸ້ມຄອງ (ແຈ້ງການ) ສະບັບນີ້ ເນື່ອງຈາກໄດ້ມີການແນະນຳໃຫ້ລູກຊາຍ ຫຼື ລູກສາວ (ນັກຮຽນ) ຂອງທ່ານຮັບການປະເມີນຜົນ ຫຼື ໃນປະຈຸບັນແມ່ນກຳລັງໄດ້ຮັບການບໍລິການສຶກສາພິເສດ. ຖ້ານັກຮຽນຂອງທ່ານມີສິດຮັບການສຶກສາພິເສດ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນ ຕ້ອງສະໜອງການສຶກສາສາທາລະນະທີ່ເໝາະສົມທີ່ບໍ່ມີຄ່າໃຊ້ຈ່າຍໃຫ້ ເຊິ່ງໂດຍທົ່ວໄປແມ່ນເອີ້ນໂດຍຫຍໍ້ວ່າ FAPE. ເພື່ອສະໜອງ FAPE, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງເຮັດວຽກຮ່ວມກັບທ່ານ. ທ່ານຈະເປັນສະມາຊິກທີມງານ IEP ທີ່ຈະພິຈາລະນາຄວາມຕ້ອງການແບບສະເພາະຂອງນັກຮຽນຂອງທ່ານ ແລະ ສ້າງຫຼັກສູດການສຶກສາແບບລາຍບຸກຄົນ ຫຼື IEP, ໃຫ້ນັກຮຽນຂອງທ່ານ.[1] IEP ຕ້ອງມີຄຳແນະນຳ ທີ່ມີການປັບໃຫ້ເໝາະກັບຄວາມຕ້ອງການແບບສະເພາະຂອງນັກຮຽນຂອງທ່ານ ແລະ ປະກອບມີການບໍລິການຊ່ວຍເຫຼືອທີ່ພຽງພໍ ເພື່ອເຮັດໃຫ້ນັກຮຽນຂອງທ່ານສາມາດມີຄວາມກ້າວໜ້າດ້ານການສຶກສາທີ່ມີຄວາມໝາຍ ແລະ ເພື່ອຊ່ວຍນັກຮຽນຂອງທ່ານໃນການໄດ້ຮັບຄວາມຮູ້ ແລະ ທັກສະຕ່າງໆ, ລວມທັງສິ່ງທີ່ຈຳເປັນສຳລັບພັດທະນາການທາງສັງຄົມ ແລະ ອາລົມຕາມຄາດໝາຍດ້ານລຳດັບ ແລະ ພັດທະນາການທີ່ເໝາະສົມ. ການບໍລິການສຶກສາພິເສດໃດໆ ທີ່ໄດ້ກຳນົດໃຫ້ນັກຮຽນຂອງທ່ານຕ້ອງໄດ້ສະໜອງໃຫ້ ໂດຍໃຊ້ງົບປະມານສາທາລະນະ ໂດຍທີ່ທ່ານຈະບໍ່ມີຄ່າໃຊ້ຈ່າຍຫຍັງ. ນັກຮຽນທຸກຄົນໃນລະບົບສຶກສາສາທາລະນະຂອງລັດທີ່ປົກຄອງຕົນເອງ, ລວມທັງນັກຮຽນທີ່ມີຄວາມພິການ, ມີສິດຮັບໂອກາດໃນການຮຽນຮູ້ສິ່ງທີ່ຢູ່ໃນມາດຕະຖານການສຶກສາ ໃນກອບຫຼັກສູດຂອງລັດ Massachusetts. Massachusetts ຍັງມອບສິດແບບລາຍບຸກຄົນໃນ FAPE ໃຫ້ແກ່ນັກຮຽກທີ່ອາໄສຢູ່ໃນລັດທີ່ມີຄວາມພິການ ທີ່ເຂົ້າໂຮງຮຽນເອກະຊົນໂດຍທີ່ອອກຄ່າໃຊ້ຈ່າຍສ່ວນຕົວ ແລະ ຜູ້ທີ່ຕ້ອງການການບໍລິການສຶກສາພິເສດ.

ທັງກົດໝາຍຂອງລັດ ແລະ ຂອງລັດຖະບານກາງມີກົດລະບຽບວ່າ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງປະຕິບັດຕາມ ເມື່ອຕັດສິນວ່ານັກຮຽນມີສິດ ຫຼື ບໍ່ ໃນການຮັບການສຶກສາພິເສດ ແລະ ນັກຮຽນຈະຮັບການບໍລິການຫຍັງ ຖ້າມີສິດ. ກົດໝາຍເຫຼົ່ານີ້ຍັງກຳນົດຂະບວນການແບບລະອຽດ ເພື່ອຮັບປະກັນວ່ານັກຮຽນໄດ້ຮັບ FAPE ໃນຊ່ວງເວລາທີ່ຜູ້ກ່ຽວມີສິດຮັບການສຶກສາພິເສດ. ການສຶກສາພິເສດແມ່ນຂົງເຂດທີ່ມີຄວາມຊັບຊ້ອນ ແລະ ການຄວບຄຸມສູງພາຍໃຕ້ກົດໝາຍການສຶກສາ. ລາຍລະອຽດໃນກົດໝາຍ ແມ່ນມີເຈດຕະນາເພື່ອປົກປ້ອງນັກຮຽນຂອງທ່ານ ແລະ ເພື່ອຊ່ວຍຮັບປະກັນວ່າ ຜູ້ກ່ຽວໄດ້ຮັບການບໍລິການສຶກສາທີ່ເໝາະສົມ. ທ່ານສາມາດຮັບການຊ່ວຍເຫຼືອເພີ່ມເຕີມ ໃນການເຂົ້າໃຈຂະບວນການດ້ານການສຶກສາພິເສດຈາກຫ້ອງການນຳພາຂອງໂຮງຮຽນຂອງທ່ານ, ພະແນກປະຖົມ ແລະ ມັດທະຍົມສຶກສາ ແຫ່ງ Massachusetts (Massachusetts Department of Elementary and Secondary Education, DESE), ອົງການຈັດຕັ້ງເພື່ອພໍ່ແມ່ຂອງນັກຮຽນທີ່ມີຄວາມພິການ ແລະ ອົງການຈັດຕັ້ງດ້ານການສຶກສາພິເສດຂອງພາກເອກະຊົນ. ຂໍ້ມູນຈາກແຫຼ່ງເຫຼົ່ານີ້ຈະຊ່ວຍທ່ານເຮັດວຽກຮ່ວມກັບ

[1] ເບິ່ງຄຳແນະນຳກ່ຽວກັບຂະບວນການ IEP ສຳລັບຂໍ້ມູນກ່ຽວກັບການສ້າງ ແລະ ການຈັດຕັ້ງປະຕິບັດ IEP ຂອງນັກຮຽນ.

ໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານ ເພື່ອຮັບປະກັນວ່າ ນັກຮຽນຂອງທ່ານໄດ້ຮັບການບໍລິການສຶກສາທີ່ເໝາະສົມ. DESE ເຜີຍແຜ່ຂໍ້ມູນລະອຽດສໍາລັບພໍ່ແມ່ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຢູ່ໃນເວັບໄຊຂອງຕົນ. ຕາຕະລາງເວັບໄຊຂອງ DESE ແມ່ນມີຢູ່ທ້າຍແຈ້ງການສະບັບນີ້.

ແຈ້ງການສະບັບນີ້ມີຂໍ້ມູນທີ່ສໍາຄັນກ່ຽວກັບສິດຂອງທ່ານ ໃນການມີສ່ວນກ່ຽວຂ້ອງໃນການວາງແຜນການສຶກສາພິເສດຂອງນັກຮຽນຂອງທ່ານ. ມາດຕະການຄຸ້ມຄອງແມ່ນກົດລະບຽບສະເພາະ ທີ່ຮັບປະກັນວ່າ ທ່ານຮູ້ສິ່ງທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນສະເໜີໃຫ້ເຮັດ (“ຮັບແຈ້ງການ”), ເຫັນດີກັບແຜນການຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນ (“ໃຫ້ການຍິນຍອມຂອງພໍ່ແມ່”) ແລະ ມີໂອກາດຕ່າງໆໃນການແກ້ໄຂຂໍ້ຂັດແຍ່ງກັບໜ່ວຍງານເຂດຄຸ້ມຄອງໂຮງຮຽນ (“ຂະບວນການທາງກົດໝາຍ”). ມາດຕະການຄຸ້ມຄອງໃນກົດໝາຍຍັງກໍານົດການຄຸ້ມຄອງເພີ່ມເຕີມໃນເອກະສານສະບັບນີ້.

ເອກະສານສະບັບນີ້ ເຊິ່ງກໍຄື ແຈ້ງການກ່ຽວກັບມາດຕະການຄຸ້ມຄອງຂອງພໍ່ແມ່ ຕອບຄຳຖາມຕໍ່ໄປນີ້:


1. “ແຈ້ງການລ່ວງໜ້າທີ່ເປັນລາຍລັກອັກສອນ” ແມ່ນຫຍັງ ແລະ ທ່ານຈະໄດ້ຮັບມັນເມື່ອໃດ? ........ ໜ້າ 3
2. “ການຍິນຍອມຂອງພໍ່ແມ່” ແມ່ນຫຍັງ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະຂໍການຍິນຍອມຂອງທ່ານເມື່ອໃດ? ........ ໜ້າ 4
3. ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈຳເປັນຕ້ອງປະເມີນຜົນເມື່ອພໍ່ແມ່ຮ້ອງຂໍບໍ? ........ ໜ້າ 8
4. “ການປະເມີນຜົນການສຶກສາແບບເອກະລາດ” ແມ່ນຫຍັງ? ........ ໜ້າ 8
5. ທ່ານສາມາດເບິ່ງບັນທຶກນັກຮຽນຂອງນັກຮຽນຂອງທ່ານເມື່ອໃດ? ........ ໜ້າ 10
6. ພໍ່ແມ່ ແລະ ໂຮງຮຽນສາມາດແກ້ໄຂຂໍ້ຂັດແຍ່ງໄດ້ແນວໃດ? ........ ໜ້າ 11
7. ຄວາມຮັບຜິດຊອບຂອງທ່ານແມ່ນຫຍັງ ຖ້າທ່ານໃຫ້ນັກຮຽນຂອງທ່ານເຂົ້າໂຮງຮຽນເອກະຊົນ? ........ ໜ້າ 20
8. ຕ້ອງເຮັດຫຍັງແດ່ ເພື່ອວາງແຜນກ່ຽວກັບການປ່ຽນໂຮງຮຽນຂອງນັກຮຽນຂອງທ່ານ? ........ ໜ້າ 20
9. ໂຮງຮຽນສາມາດປະຕິບັດວິໄນກັບນັກຮຽນທີ່ມີຄວາມພິການໄດ້ແນວໃດ? ........ ໜ້າ 21
10. ສາມາດຊອກຫາກົດໝາຍ ແລະ ລະບຽບການ ແລະ ຂໍ້ມູນອື່ນໆທີ່ມີປະໂຫຍດຢູ່ບ່ອນໃດ? ........ ໜ້າ 23


ທ່ານຈະໄດ້ຮັບແຈ້ງການສະບັບນີ້ຢ່າງໜ້ອຍໜຶ່ງເທື່ອຕໍ່ປີ ຖ້າມີການລະບຸວ່ານັກຮຽນຂອງທ່ານມີສິດຮັບການສຶກສາພິເສດ. ນອກຈາກນັ້ນ, ທ່ານຍັງສາມາດຂໍສຳເນົາຈາກໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ຕະຫຼອດເວລາ ຫຼື ຈາກ DESE. ເອກະສານສະບັບນີ້ ແມ່ນມີຢູ່ໃນເວັບໄຊຂອງ DESE ທີ່ https://www.doe.mass.edu/specialeducation/families/prb/default.html..

## 1. ແຈ້ງການລ່ວງໜ້າທີ່ເປັນລາຍລັກອັກສອນແມ່ນຫຍັງ ແລະ ທ່ານຈະໄດ້ຮັບມັນເມື່ອໃດ? 34 CFR §300.503

ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງມອບແຈ້ງການທີ່ເປັນລາຍລັກອັກສອນໃຫ້ທ່ານ ເມື່ອໜ່ວຍງານດັ່ງກ່າວສະເໜີ ຫຼື ປະຕິເສດທີ່ຈະດຳເນີນ

ຂັ້ນຕອນໃນການລະບຸນັກຮຽນຂອງທ່ານ, ໃນການປະເມີນຜົນນັກຮຽນຂອງທ່ານ, ໃນການໃຫ້ບໍລິການພິເສດແກ່ນັກຮຽນຂອງທ່ານ ຫຼື ໃນການປ່ຽນຫຼັກສູດຂອງນັກຮຽນຂອງທ່ານ. ລະບຽບການຂອງລັດຖະບານກາງເອີ້ນສິ່ງນີ້ວ່າ "ແຈ້ງການລ່ວງໜ້າທີ່ເປັນລາຍລັກອັກສອນ". ແຈ້ງການທີ່ເປັນລາຍລັກອັກສອນຕ້ອງ:

- ໃຫ້ລາຍລະອຽດກ່ຽວກັບ**ສິ່ງ**ທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນສະເໜີ ຫຼື ປະຕິເສດທີ່ຈະເຮັດ;
- ອະທິບາຍ**ເຫດຜົນວ່າເປັນຫຍັງ**ທາງໜ່ວຍງານເຂດຄຸ້ມຄອງໂຮງຮຽນຈຶ່ງສະເໜີ ຫຼື ປະຕິເສດທີ່ຈະດໍາເນີນການ;
- ໃຫ້ລາຍລະອຽດ ກ່ຽວກັບວິທີການທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນໃຊ້ໃນການຕັດສິນໃຈໃນການສະເໜີ ຫຼື ປະຕິເສດດໍາເນີນການ, ລວມທັງບອກທ່ານກ່ຽວກັບຂະບວນການປະເມີນຜົນແຕ່ລະຄັ້ງ, ຜົນການປະເມີນ, ບັນທຶກ ຫຼື ລາຍງານທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານນໍາໃຊ້ໃນການຕັດສິນໃຈ; ແລະ
- ໃຫ້ລາຍລະອຽດ ກ່ຽວກັບທາງເລືອກອື່ນໆ ທີ່ທີມງານຫຼັກສູດການສຶກສາແບບລາຍບຸກຄົນ (Individualized education program, IEP) ຂອງນັກຮຽນຂອງທ່ານພິຈາລະນາ ແລະ ເຫດຜົນທີ່ທາງເລືອກເຫຼົ່ານັ້ນຖືກປະຕິເສດ.

ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະສະໜອງຂໍ້ມູນນີ້ໃຫ້ທ່ານໂດຍນໍາໃຊ້ແບບຟອມທີ່ສ້າງໂດຍ DESE ແລະ ທີ່ມີຢູ່ໃນເວັບໄຊຂອງ DESE ຫຼື ແບບຟອມຂອງເຂົາເຈົ້າເອງທີ່ມີຂໍ້ມູນດຽວກັນ.

ທ່ານຈະໄດ້ຮັບແຈ້ງການລ່ວງໜ້າທີ່ເປັນລາຍລັກອັກສອນເມື່ອໜ່ວຍງານເຂດຄຸ້ມຄອງໂຮງຮຽນສະເໜີຂໍເຮັດການປະເມີນຜົນເບື້ອງຕົ້ນ ຫຼື ການປະເມີນຜົນຄືນ; ສະເໜີ IEP ແບບໃໝ່ ຫຼື ແບບທີ່ມີການແກ້ໄຂ; ສະເໜີປ່ຽນການຈັບຊ້ອນ, ລວມທັງການປ່ຽນການຈັບຊ້ອນທີ່ໄດ້ສະເໜີໄປແລ້ວເນື່ອງຈາກເຫດຜົນທາງລະບຽບວິໄນ; ຫຼື ສະເໜີຢຸດຕິການບໍລິການສຶກສາພິເສດ.

ນອກຈາກນັ້ນ, ທ່ານຍັງຈະໄດ້ຮັບແຈ້ງການ ຖ້າໜ່ວຍງານເຂດຄຸ້ມຄອງໂຮງຮຽນພົບວ່າ ນັກຮຽນບໍ່ມີສິດຮັບການບໍລິການສຶກສາພິເສດ ຫຼື ປະຕິເສດຄໍາຮ້ອງຂໍຂອງທ່ານທີ່ກ່ຽວກັບການປະເມີນຜົນ ຫຼື ການສະໜອງການສຶກສາພິເສດ ໃຫ້ແກ່ນັກຮຽນຂອງທ່ານ. ແຈ້ງການຈາກໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງເປັນພາສາແມ່ຂອງທ່ານ ຫຼື ເປັນການສື່ສານຮູບແບບອື່ນທີ່ທ່ານນໍາໃຊ້, ເວັ້ນແຕ່ວ່າ ຈະເປັນໄປບໍ່ໄດ້ຢ່າງຊັດເຈນ. ຖ້າພາສາແມ່ຂອງທ່ານ ຫຼື ການສື່ສານຮູບແບບອື່ນໆບໍ່ແມ່ນພາສາຂຽນ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງຮັບປະກັນວ່າ ໄດ້ມີການແປແຈ້ງການຂອງໂຮງຮຽນໃຫ້ທ່ານຜ່ານທາງວາຈາ ຫຼື ດ້ວຍວິທີການອື່ນ (ຕົວຢ່າງ: ພາສາມື) ແລະ ຮັບປະກັນວ່າ ທ່ານເຂົ້າໃຈເນື້ອໃນຂອງແຈ້ງການ.

ໜ່ວຍງານເຂດຄຸ້ມຄອງໂຮງຮຽນຍັງຈະສົ່ງແຈ້ງການທີ່ເປັນລາຍລັກອັກສອນ ແລະ ຮ້ອງຂໍການຍິນຍອມຂອງທ່ານ ຫຼື ການອະນຸຍາດທີ່ເປັນລາຍລັກອັກສອນ ກ່ອນໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະຂໍນໍາໃຊ້ປະກັນສຸຂະພາບສາທາລະນະ (MassHealth ຫຼື Medicaid) ເພື່ອຈ່າຍຄ່າບໍລິການສຶກສາພິເສດຂອງນັກຮຽນເປັນເທື່ອທໍາອິດ.

ເມື່ອທ່ານໄດ້ຮັບແຈ້ງການລ່ວງໜ້າທີ່ເປັນລາຍລັກອັກສອນ, ທ່ານຍັງຈະໄດ້ຮັບສໍາເນົາແຈ້ງການກ່ຽວກັບມາດຕະການຄຸ້ມຄອງສະບັບນີ້ ຫຼື ຖ້າທ່ານໄດ້ຮັບແຈ້ງການສະບັບນີ້ແລ້ວໃນຊ່ວງສົກປີຮຽນປະຈຸບັນ, ທ່ານຈະໄດ້ຮັບແຈ້ງກ່ຽວກັບວິທີທີ່ທ່ານສາມາດຮັບເອົາສໍາເນົາເອກະສານສະບັບອື່ນໆໄດ້. ນອກຈາກນັ້ນ, ທ່ານຍັງຈະໄດ້ຮັບຂໍ້ມູນກ່ຽວກັບຜູ້ທີ່ທ່ານສາມາດຕິດຕໍ່ ເພື່ອຂໍຄວາມຊ່ວຍເຫຼືອໃນການເຂົ້າໃຈກົດໝາຍວ່າດ້ວຍການສຶກສາພິເສດຂອງລັດ ແລະ ລັດຖະບານກາງ.

## 2. ການຍິນຍອມຂອງພໍ່ແມ່ແມ່ນຫຍັງ? 34 CFR §300.9 ແລະ 603 CMR 28.07 (1)

ໜ່ວຍງານເຂດຄຸ້ມຄອງໂຮງຮຽນອາດບໍ່ຈັດການສອບເສັງພິເສດ ຫຼື ໃຫ້ການບໍລິການພິເສດແກ່ນັກຮຽນຂອງທ່ານ ເວັ້ນແຕ່ວ່າທ່ານຈະເຫັນດີ ແລະ ໃຫ້ "ການຍິນຍອມຂອງພໍ່ແມ່" ຂອງທ່ານຢ່າງເປັນລາຍລັກອັກສອນ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງຕິດຕໍ່ທ່ານ ແລະ ອະທິບາຍຢ່າງຊັດເຈນກ່ຽວກັບສິ່ງ ທີ່ໜ່ວຍງານສະເໜີເຮັດໃຫ້ນັກຮຽນຂອງທ່ານ. ຈາກນັ້ນ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະຂໍໃຫ້ທ່ານເຊັນຊື່ຂອງທ່ານໃສ່ແບບຟອມຍິນຍອມ ເພື່ອສະແດງວ່າທ່ານເຫັນດີກັບການສະເໜີຂອງໂຮງຮຽນ. ການເຮັດສິ່ງດັ່ງກ່າວແມ່ນການໃຫ້ "ການຍິນຍອມຂອງພໍ່ແມ່".

ການຍິນຍອມແມ່ນຕາມຄວາມສະໝັກໃຈ. ທ່ານສາມາດເອົາ ຫຼື ຖອນການຍິນຍອມຂອງທ່ານຄືນໄດ້ທຸກເວລາ. ຖ້າທ່ານຕ້ອງການຖອນການຍິນຍອມ ທ່ານຕ້ອງດຳເນີນການຢ່າງເປັນລາຍລັກອັກສອນ. ການຖອນການຍິນຍອມຈະມີຜົນນຳໃຊ້ກັບການດຳເນີນການ ໃນອະນາຄົດໂດຍໜ່ວຍງານເຂດຄຸ້ມຄອງໂຮງຮຽນເທົ່ານັ້ນ ໂດຍທີ່ບໍ່ມີຜົນກັບສິ່ງທີ່ໄດ້ເກີດຂຶ້ນແລ້ວ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານ ບໍ່ສາມາດໃຊ້ການປະຕິເສດຂອງທ່ານຕໍ່ການຍິນຍອມຮັບການບໍລິການ ຫຼື ກິດຈະກຳໃດໜຶ່ງ ເພື່ອເປັນເຫດຜົນໃນການປະຕິເສດທ່ານ ຫຼື ນັກຮຽນຂອງທ່ານໃນການຮັບການບໍລິການ, ຜົນປະໂຫຍດ ຫຼື ກິດຈະກຳອື່ນໆ.

ການຍິນຍອມຂອງທ່ານແມ່ນບໍ່ຈຳເປັນກ່ອນທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານຈະສາມາດກວດສອບຂໍ້ມູນທີ່ມີຢູ່ ເຊິ່ງເປັນສ່ວນໜຶ່ງຂອງການປະເມີນຜົນ ຫຼື ການປະເມີນຜົນຄືນນັກຮຽນຂອງທ່ານ, ຈັດການສອບເສັງ ຫຼື ການປະເມີນຜົນອື່ນໆໃຫ້ນັກຮຽນຂອງທ່ານ ເຊິ່ງເປັນສິ່ງທີ່ຈັດໃຫ້ນັກຮຽນທຸກຄົນໂດຍບໍ່ມີການຍິນຍອມເຊັ່ນ: MCAS ຫຼື ການສອບເສັງໃນຫ້ອງຮຽນ ເຊິ່ງເປັນສ່ວນໜຶ່ງຂອງຫຼັກສູດການສຶກສາທົ່ວໄປ ຫຼື ແບ່ງປັນຂໍ້ມູນກັບເຈົ້າໜ້າທີ່ສຶກສາຂອງລັດຖະບານກາງ ຫຼື ລັດ.

### 2.1 ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະຂໍການຍິນຍອມຂອງທ່ານເມື່ອໃດ?

**34 CFR §§ 300.300, 300.154 ແລະ 603 CMR 28.07(1)**

ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະຂໍການຍິນຍອມຂອງພໍ່ແມ່ຂອງທ່ານໃນສະຖານະການຕໍ່ໄປນີ້:

**ເພື່ອອະນຸຍາດໃຫ້ມີການປະເມີນຜົນເບື້ອງຕົ້ນ ເພື່ອກຳນົດວ່າ ນັກຮຽນມີສິດຮັບການສຶກສາພິເສດບໍ່**

ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ສາມາດດຳເນີນການປະເມີນຜົນເບື້ອງຕົ້ນກັບນັກຮຽນຂອງທ່ານ ເພື່ອກຳນົດວ່າ ນັກຮຽນຂອງທ່ານມີສິດຮັບການສຶກສາພິເສດ ແລະ/ຫຼື ການບໍລິການທີ່ກ່ຽວຂ້ອງໂດຍບໍ່ໄດ້ຮັບການຍິນຍອມຈາກທ່ານບໍ່. ຖ້າມີການແນະນຳໃຫ້ນັກຮຽນຂອງທ່ານເຮັດການປະເມີນຜົນ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນ ຕ້ອງຂໍການຍິນຍອມຂອງທ່ານ ຕໍ່ການປະເມີນຜົນພາຍໃນຫ້າມື້ທີ່ມີການເຂົ້າໂຮງຮຽນ.

**ເພື່ອອະນຸມັດການບໍລິການເບື້ອງຕົ້ນ**

ຫຼັງການປະເມີນຜົນເບື້ອງຕົ້ນໄດ້ສຳເລັດ, ຖ້າຫາກວ່າທີມງານຫຼັກສູດການສຶກສາແບບລາຍບຸກຄົນ (Individualized Education

Program, IEP) ຕັດສິນວ່ານັກຮຽນຂອງທ່ານມີສິດຮັບການສຶກສາພິເສດ, ທີມງານ IEP ຈະສະເໜີການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ແລະ ການຊັບຊ້ອນໃຫ້ນັກຮຽນຂອງທ່ານ. ທ່ານເປັນສະມາຊິກທີມງານ IEP ແລະ ຕ້ອງໃຫ້ການຍິນຍອມຂອງທ່ານກ່ອນທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນ ຈະສາມາດສະໜອງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງໃຫ້ນັກຮຽນຂອງທ່ານເປັນເທື່ອທຳອິດ. ຖ້າທ່ານບໍ່ຍິນຍອມ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະບໍ່ສາມາດສະໜອງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງໃຫ້ນັກຮຽນຂອງທ່ານ. ທ່ານສາມາດຍອມຮັບ ຫຼື ປະຕິເສດການສະເໜີທັງໝົດ ຫຼື ບາງສ່ວນ. IEP ຫຼື ພາກສ່ວນໃດໜຶ່ງທີ່ທ່ານຍອມຮັບຕ້ອງໄດ້ເລີ່ມຕົ້ນທັນທີທີ່ທ່ານຍອມຮັບມັນ.

### ເພື່ອເຮັດປ່ຽນການບໍລິການ, ການຊັບຊ້ອນ ຫຼື ການປະເມີນຄືນໃໝ່

ເມື່ອທ່ານເຫັນດີກັບ IEP ສຳລັບນັກຮຽນຂອງທ່ານ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນ ຕ້ອງຮັບເອົາການຍິນຍອມຈາກທ່ານກ່ອນທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະສາມາດປ່ຽນແປງການບໍລິການ ຫຼື ການຊັບຊ້ອນນັກຮຽນຂອງທ່ານ ຫຼື ດຳເນີນການປະເມີນຄືນ.[2] ຖ້າທ່ານປະຕິເສດທີ່ຈະໃຫ້ການຍິນຍອມ, ທ່ານມີພັນທະໃນການພົວພັນກັບໜ່ວຍງານ ເພື່ອປຶກສາຫາລືຢ່າງຕໍ່ເນື່ອງ ໃນການແກ້ໄຂສິ່ງທີ່ທ່ານບໍ່ເຫັນດີນຳ. ຖ້າທ່ານໄດ້ໃຫ້ການຍິນຍອມຕໍ່ການບໍລິການໃນອະດີດ ແລະ ຕອນນີ້ ແມ່ນຕ້ອງການຖອນການຍິນຍອມ ແລະ ຖອນນັກຮຽນຂອງທ່ານອອກຈາກການບໍລິການ, ທ່ານຕ້ອງດຳເນີນການຢ່າງເປັນລາຍລັກອັກສອນ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ສາມາດສະເໜີຂໍໃຫ້ມີການພິຈາລະນາຢູ່ທີ່ຫ້ອງການອຸທອນການສຶກສາພິເສດ (Bureau of Special Education Appeals, BSEA) ເພື່ອຮັບອະນຸຍາດໃຫ້ການສະໜອງການບໍລິການສຶກສາ ຫຼື ເພື່ອປະເມີນຄືນນັກຮຽນຂອງທ່ານ ໂດຍບໍ່ມີການຍິນຍອມຂອງທ່ານ.

### ເພື່ອເຂົ້າເຖິງສິດທິປະໂຫຍດຂອງປະກັນສຸຂະພາບສາທາລະນະ (MassHealth ຫຼື Medicaid) ເປັນເທື່ອທຳອິດ

ໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ຮັບອະນຸຍາດໃຫ້ນຳໃຊ້ປະກັນສຸຂະພາບສາທາລະນະ (MassHealth ຫຼື Medicaid) ເພື່ອຈ່າຍຄ່າບໍລິການສຶກສາພິເສດຈຳນວນໜຶ່ງ ທີ່ມີຢູ່ໃນ IEP ຂອງນັກຮຽນ ເຊິ່ງຄຸ້ມຄອງໂດຍປະກັນສຸຂະພາບສາທາລະນະ. ກ່ອນທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະເຂົ້າຫາ MassHealth ເປັນເທື່ອທຳອິດ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງສົ່ງແຈ້ງການທີ່ເປັນລາຍລັກອັກສອນໃຫ້ທ່ານ ທີ່ລະບຸວ່າໜ່ວຍງານຈະຂໍເບີກເງິນຄືນ ແລະ ຂໍເອົາການຍິນຍອມແບບສະໝັກໃຈຂອງທ່ານຢ່າງເປັນລາຍລັກອັກສອນເພື່ອສິ່ງດັ່ງກ່າວ. ແຈ້ງການຈະບອກທ່ານວ່າການບໍລິການສຶກສາພິເສດແມ່ນມີໃຫ້ໂດຍທີ່ທ່ານ ຫຼື ຄອບຄົວຂອງທ່ານບໍ່ຕ້ອງອອກຄ່າໃຊ້ຈ່າຍ; ຈະໃຫ້ຄວາມຊັດເຈນວ່າການຍິນຍອມຂອງທ່ານຈະບໍ່ນຳໄປສູ່ການປ່ຽນແປງໃນຜົນປະໂຫຍດ ຫຼື ການມີສິດໃນ MassHealth ຂອງລູກຂອງທ່ານ; ຈະອະທິບາຍວ່າຂໍ້ມູນໃດກ່ຽວກັບນັກຮຽນຂອງທ່ານ ທີ່ຈະຖືກແບ່ງປັນເພື່ອທີ່ຈະເຂົ້າເຖິງ MassHealth; ແຈ້ງເຕືອນທ່ານວ່າທ່ານສາມາດຖອນການຍິນຍອມຂອງທ່ານໄດ້ຕະຫຼອດເວລາ; ແລະ ໃຫ້ຄວາມຊັດເຈນວ່າຈະບໍ່ມີການປ່ຽນແປງຕໍ່ການບໍລິການ ຫຼື ຫຼັກສູດການສຶກສາພິເສດຂອງນັກຮຽນຂອງທ່ານ ຖ້າທ່ານຖອນ ຫຼື ບໍ່ໃຫ້ການຍິນຍອມ. ຖ້າຫາກວ່າທ່ານຍົກຍ້າຍ ຫຼື ນັກຮຽນຂອງທ່ານໄດ້ລົງທະບຽນຢູ່ໃນໜ່ວຍງານອື່ນ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນໃໝ່ຈະຂໍໃຫ້ທ່ານໃຫ້ການຍິນຍອມອີກຄັ້ງ.

### ເພື່ອອະນຸຍາດໃຫ້ສະມາຊິກໃນທີມງານ IEP ບໍ່ເຂົ້າຮ່ວມປະຊຸມຂອງທີມງານ

---

[2] ນອກຈາກນັ້ນ, ທ່ານຍັງມີສິດໃນການສັງເກດການນັກຮຽນຂອງທ່ານໃນຫຼັກສູດປະຈຸບັນຂອງຜູ້ກ່ຽວ ແລະ ສັງເກດການຫຼັກສູດທີ່ໄດ້ສະເໜີໃຫ້ກ່ອນທີ່ຈະມີການຊັບຊ້ອນນັກຮຽນຂອງທ່ານ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເບິ່ງເອກະສານ "ການສັງເກດການຫຼັກສູດການສຶກສາໂດຍພໍ່ແມ່" ຂອງ DESE.

ສະມາຊິກທີມງານ IEP ສາມາດໄດ້ຮັບການອະນຸຍາດຈາກການບໍ່ເຂົ້າຮ່ວມການປະຊຸມຂອງທີມງານ ຖ້າທ່ານເຫັນດີຢ່າງເປັນລາຍລັກອັກສອນລ່ວງໜ້າກ່ອນການປະຊຸມ. ຖ້າທີມງານຈະປຶກສາຫາລືກ່ຽວກັບຂົງເຂດພາຍໃຕ້ສະມາຊິກທີມງານທີ່ໄດ້ຮັບອະນຸຍາດນັ້ນ, ສະມາຊິກທີ່ໄດ້ຮັບອະນຸຍາດນັ້ນຕ້ອງໃຫ້ຂໍ້ມູນຂອງຜູ້ກ່ຽວຢ່າງເປັນລາຍລັກອັກສອນກ່ອນການປະຊຸມຂອງທີມງານ. ຖ້າທ່ານບໍ່ເຫັນດີອະນຸຍາດໃຫ້ສະມາຊິກໃນທີມງານ, ຜູ້ກ່ຽວຕ້ອງເຂົ້າຮ່ວມປະຊຸມຂອງທີມງານ IEP.

### 2.2 ຈະມີການຂໍການຍິນຍອມຈາກນັກຮຽນເມື່ອໃດ? 34 CFR §300.520 ແລະ 603 CMR 28.07 (5)

ພາຍໃຕ້ກົດໝາຍຂອງ Massachusetts, ນັກຮຽນແມ່ນເປັນຜູ້ໃຫຍ່ເມື່ອອາຍຸຂອງຜູ້ກ່ຽວຄົບສິບແປດ (18) ປີ. **ເມື່ອນັກຮຽນມີອາຍຸ 18 ປີ,** ສະນັ້ນ, ສິດໃນການຕັດສິນໃຈທັງໝົດທີ່ທ່ານມີໃນຖານະເປັນພໍ່ແມ່ຈະຖືກໂອນໄປໃຫ້ນັກຮຽນທີ່ເປັນຜູ້ໃຫຍ່ຂອງທ່ານ, ເວັ້ນແຕ່ວ່າ ສານໄດ້ແຕ່ງຕັ້ງຜູ້ປົກຄອງຕາມກົດໝາຍໃຫ້ນັກຮຽນຂອງທ່ານ ຫຼື ນັກຮຽນຂອງທ່ານໄດ້ລະບຸຢ່າງເປັນລາຍລັກອັກສອນວ່າຜູ້ກ່ຽວຕ້ອງການແບ່ງປັນສິດໃນການຕັດສິນໃຈກັບທ່ານ ຫຼື ຕ້ອງການໃຫ້ທ່ານສືບຕໍ່ມີອຳນາດໃນການຕັດສິນໃຈ ກ່ຽວກັບຫຼັກສູດການສຶກສາຂອງຜູ້ກ່ຽວ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງປຶກສາຫາລືກັບທ່ານ ແລະ ນັກຮຽນຂອງທ່ານເຖິງຜົນກະທົບຈາກການໂອນສິດນີ້ຢ່າງໜ້ອຍໜຶ່ງປີ ກ່ອນວັນເກີດຄົບຮອບສິບແປດປີຂອງນັກຮຽນ. ໃນຖານະເປັນພໍ່ແມ່ຂອງນັກຮຽນຜູ້ໃຫຍ່ ທີ່ມີຄວາມພິການ, ທ່ານຈະສືບຕໍ່ຮັບແຈ້ງການທີ່ຈຳເປັນທັງໝົດຈາກໂຮງຮຽນ ແລະ ທ່ານຈະສາມາດສືບຕໍ່ກວດກາບັນທຶກການສຶກສາຂອງນັກຮຽນຂອງທ່ານ ເຖິງວ່ານັກຮຽນຂອງທ່ານຈະຕັດສິນໃຈກ່ຽວກັບການສຶກສາຂອງຜູ້ກ່ຽວເອງ.

### 2.3 ພໍ່ແມ່ທີ່ເປັນຕົວແທນສຳລັບການສຶກສາພິເສດຈະໃຫ້ການຍິນຍອມເມື່ອໃດ?

**34 CFR §300.519 (g) ແລະ 603 CMR 28.07 (7)**

ຖ້ານັກຮຽນຢູ່ພາຍໃຕ້ການຄຸ້ມຄອງຂອງພະແນກເດັກ ແລະ ຄອບຄົວ (Department of Children and Families) ຫຼື ພໍ່ແມ່ ຫຼື ຜູ້ປົກຄອງຂອງນັກຮຽນແມ່ນບໍ່ສາມາດລະບຸ ຫຼື ຊອກຫາໄດ້ ຫຼື ສິດໃນການເປັນພໍ່ແມ່ຂອງເຂົາເຈົ້າຖືກຍົກເລີກ, DESE ມີຄວາມຮັບຜິດຊອບໃນການຮັບປະກັນວ່າ ຈະມີຜູ້ໃຫຍ່ທີ່ບໍ່ມີການຂັດຜົນປະໂຫຍດ ເປັນຜູ້ເຮັດການຕັດສິນໃຈດ້ານການສຶກສາພິເສດໃນນາມຂອງນັກຮຽນ. ບຸກຄົນດັ່ງກ່າວນີ້ແມ່ນເອີ້ນວ່າ ພໍ່ແມ່ຕົວແທນສຳລັບການສຶກສາພິເສດ. DESE ຈະກຳນົດວ່າ ມີຄວາມຈຳເປັນໃນການແຕ່ງຕັ້ງພໍ່ແມ່ຕົວແທນ ສຳລັບການສຶກສາພິເສດໃຫ້ນັກຮຽນບໍ່. ຖ້າມີການແຕ່ງຕັ້ງ, ພໍ່ແມ່ຕົວແທນສຳລັບການສຶກສາພິເສດຈະມີສິດ ແລະ ຄວາມຮັບຜິດຊອບດຽວກັນກັບພໍ່ແມ່ຕໍ່ບັນຫາດ້ານການສຶກສາພິເສດສຳລັບນັກຮຽນ.

### 2.4 ຂ້ອຍສາມາດຖອນການຍິນຍອມໄດ້ແນວໃດ? 34 CFR §300.300(b)(4) ແລະ 300.9

ຖ້າທ່ານໄດ້ໃຫ້ການຍິນຍອມສຳລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ແລະ ຕອນນີ້ຕ້ອງການຖອນການຍິນຍອມຂອງທ່ານ, ທ່ານຕ້ອງດຳເນີນການຢ່າງເປັນລາຍລັກອັກສອນ. ທ່ານສາມາດຖອນການຍິນຍອມຂອງທ່ານສຳລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ, ການບໍລິການສະເພາະ ຫຼື ການຊັບຊ້ອນ ຫຼື ການນຳໃຊ້ຜົນປະໂຫຍດ MassHealth ຫຼື Medicaid ໂດຍໜ່ວຍງານເພື່ອນັກຮຽນຂອງທ່ານ. ເມື່ອໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ຮັບໜັງສືຂອງທ່ານ, ໜ່ວຍງານຈະສົ່ງແຈ້ງການໃຫ້ທ່ານ ເຊິ່ງຈະລະບຸການປ່ຽນແປງ, ຖ້າຫາກວ່າມີ, ໃນການຊັບຊ້ອນ ແລະ ການບໍລິການດ້ານການສຶກສາ ເຊິ່ງເປັນຜົນມາຈາກການຖອນການຍິນຍອມ. ເມື່ອທ່ານຖອນການຍິນຍອມຂອງທ່ານສຳລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງທັງໝົດ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະບໍ່ມີຄວາມຈຳເປັນໃນການສະໜອງ FAPE ຫຼື ມີການປະຊຸມ IEP ຫຼື ສ້າງ IEP ໃຫ້ນັກຮຽນຂອງທ່ານອີກຕໍ່ໄປ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະບໍ່ມີຄວາມຈຳເປັນໃນການແກ້ໄຂບັນທຶກນັກຮຽນຂອງທ່ານ ເພື່ອຖອດລາຍການ

ແນະນຳການບໍລິການສຶກສາພິເສດອອກ ເຊິ່ງເປັນຜົນມາຈາກການຖອນການຍິນຍອມຂອງທ່ານ.

3. **ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈຳເປັນຕ້ອງປະເມີນຜົນນັກຮຽນເມື່ອພໍ່ແມ່ຮ້ອງຂໍບໍ?**

**34 CFR §300.301 ແລະ 603 CMR 28.04**

ນັກຮຽນຕ້ອງໄດ້ຮັບການປະເມີນຜົນທີ່ຄົບຖ້ວນ ແລະ ຮອບດ້ານ ເພື່ອກຳນົດວ່າ ນັກຮຽນມີຄວາມພິການ ແລະ ມີສິດຮັບການສຶກສາພິເສດບໍ່ ແລະ ເພື່ອຊ່ວຍໃນການກຳນົດການສຶກສາພິເສດທີ່ເໝາະສົມ ແລະ ການບໍລິການທີ່ກ່ຽວຂ້ອງ ທີ່ອາດຈະມີຄວາມຈຳເປັນ ຖ້າຫາກວ່າມີສິດ. ພໍ່ແມ່ທີ່ມີຄວາມກັງວົນກ່ຽວກັບພັດທະນາການຂອງລູກເຂົາເຈົ້າ ຫຼື ມີຄວາມສົງໄສກ່ຽວກັບຄວາມພິການທີ່ອາດຈະມີ ແມ່ນສາມາດພາລູກຂອງເຂົາເຈົ້າມາຮັບການປະເມີນຜົນເບື້ອງຕົ້ນໄດ້. ບໍ່ຈຳເປັນຕ້ອງໃຊ້ຄຳເວົ້າພິເສດໃນການແນະນຳການປະເມີນຜົນເບື້ອງຕົ້ນ. ເມື່ອໄດ້ຮັບຄຳຮ້ອງຂໍດັ່ງກ່າວສຳລັບການປະເມີນຜົນເບື້ອງຕົ້ນ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງສົ່ງແຈ້ງການໃຫ້ພໍ່ແມ່ ແລະ ຕ້ອງຂໍການຍິນຍອມຈາກພໍ່ແມ່ເພື່ອເຮັດການປະເມີນຜົນ. (ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ຄ່ອຍຈະປະຕິເສດການເຮັດການປະເມີນຜົນເບື້ອງຕົ້ນ ແລະ ສາມາດເຮັດເຊັ່ນນັ້ນໄດ້ ຖ້າຫາກວ່າພໍ່ແມ່ ຫຼື ບຸກຄົນອື່ນທີ່ເປັນຜູ້ແນະນຳບໍ່ໄດ້ມີຄວາມສົງໄສກ່ຽວກັບຄວາມພິການ ຫຼື ບໍ່ໄດ້ມີຄວາມກັງວົນກ່ຽວກັບພັດທະນາການຂອງນັກຮຽນ).

ເມື່ອມີຄວາມເໝາະສົມ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຍັງສາມາດສະໜອງຂໍ້ມູນໃຫ້ພໍ່ແມ່ ກ່ຽວກັບການບໍລິການຊ່ວຍເຫຼືອອື່ນໆ ທີ່ອາດຈະເໝາະກວ່າກັບຄວາມຕ້ອງການສະເພາະຂອງນັກຮຽນ. ຢ່າງໃດກໍຕາມ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ສາມາດປະຕິເສດການປະເມີນຜົນນັກຮຽນ ເຊິ່ງຖືກແນະນຳໃຫ້ຮັບການປະເມີນຜົນຕາມທີ່ໄດ້ອະທິບາຍຂ້າງເທິງ ບົນພື້ນຖານຫຼັກສູດທີ່ມີການແນະນຳລ່ວງໜ້າ ຫຼື ເພື່ອລອງກິດຈະກຳຊ່ວຍເຫຼືອການແນະນຳອື່ນໆ ຫຼື ເພື່ອເຫດຜົນອື່ນໆ. ນອກຈາກນັ້ນ, ກົດໝາຍໄດ້ກຳນົດໃຫ້ມີການປະເມີນຜົນຄືນເປັນໄລຍະ ເພື່ອຮັບປະກັນວ່ານັກຮຽນໄດ້ຮັບປະໂຫຍດຈາກການສຶກສາພິເສດ ແລະ ສືບຕໍ່ທີ່ຈະຕ້ອງການການສຶກສາພິເສດ. ການຍິນຍອມຂອງພໍ່ແມ່ຈະມີຄວາມຈຳເປັນສະເໝີກ່ອນການປະເມີນຜົນເຫຼົ່ານີ້.

4. **ການປະເມີນຜົນການສຶກສາແບບເອກະລາດແມ່ນຫຍັງ?**

ການປະເມີນຜົນການສຶກສາແບບເອກະລາດ (Independent Educational Evaluation, IEE) ແມ່ນການປະເມີນຜົນ ທີ່ດຳເນີນໂດຍຜູ້ກວດສອບທີ່ມີຄຸນສົມບັດ ທີ່ບໍ່ແມ່ນພະນັກງານຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນ ທີ່ມີຄວາມຮັບຜິດຊອບຕໍ່ການສຶກສາຂອງນັກຮຽນຂອງທ່ານ.

ທ່ານມີສິດຂໍ IEE ຂອງນັກຮຽນຂອງທ່ານໂດຍໃຊ້ງົບປະມານສາທາລະນະ ຖ້າທ່ານບໍ່ເຫັນດີກັບການປະເມີນຜົນຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນ. ທ່ານມີສິດຂໍ IEE ໜຶ່ງລາຍການຕໍ່ຂົງເຂດການປະເມີນຕໍ່ຮອບການປະເມີນຜົນ. ຖ້າທ່ານສະເໜີຂໍ IEE, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງໃຫ້ຂໍ້ມູນກ່ຽວກັບບ່ອນທີ່ທ່ານສາມາດຮັບເອົາ IEE ແລະ ກ່ຽວກັບຂໍ້ກຳນົດຂອງລັດທີ່ມີຜົນນຳໃຊ້ກັບ IEE. ຢູ່ Massachusetts, IEE ທັງໝົດແມ່ນຕ້ອງດຳເນີນໂດຍບຸກຄົນທີ່ມີຄຸນສົມບັດ ທີ່ໄດ້ລົງທະບຽນ, ມີການຮັບຮອງ, ມີໃບອະນຸຍາດ ຫຼື ບໍ່ສະນັ້ນແມ່ນໄດ້ຮັບການອະນຸມັດ ແລະ ແມ່ນບຸກຄົນທີ່ປະຕິບັດຕາມອັດຕາທີ່ກຳນົດໂດຍໜ່ວຍງານຮັບຜິດຊອບຂອງລັດ. ຢ່າງໃດກໍຕາມ, ສະຖານະການແບບສະເພາະຂອງນັກຮຽນອາດສະທ້ອນເຖິງອັດຕາການປະເມີນລາຍບຸກຄົນ ທີ່ສູງກວ່າອັດຕາປົກກະຕິທີ່ອະນຸຍາດ.

**4.1 ການປະເມີນຜົນການສຶກສາແບບເອກະລາດຄວນດຳເນີນໂດຍໃຊ້ ງົບປະມານສາທາລະນະເມື່ອໃດ?**

**34 CFR §300.502, M.G.L. C. 71B, § 3 ແລະ 603 CMR 28.04(5)**

ພາຍໃຕ້ກົດໝາຍຂອງລັດຖະບານກາງ, ທ່ານມີສິດໃນການປະເມີນຜົນການສຶກສາແບບເອກະລາດຂອງລູກຂອງທ່ານ ໂດຍໃຊ້ງົບປະມານສາທາລະນະ ຖ້າທ່ານບໍ່ເຫັນດີກັບການປະເມີນຜົນລູກຂອງທ່ານທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ດຳເນີນ ເຊິ່ງຢູ່ພາຍໃຕ້ເງື່ອນໄຂຕໍ່ໄປນີ້:

1. ຖ້າທ່ານບໍ່ເຫັນດີກັບ IEE ຂອງລູກທ່ານໂດຍໃຊ້ງົບປະມານສາທາລະນະ, ໂດຍບໍ່ມີຄວາມຫຼ້າຊ້າທີ່ບໍ່ຈຳເປັນ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານຕ້ອງ:
    a. ສະເໜີຂໍການພິຈາລະນາຕາມຂະບວນການທາງກົດໝາຍ ເພື່ອສະແດງວ່າການປະເມີນຜົນລູກຂອງທ່ານ ໂດຍໜ່ວຍງານແມ່ນເໝາະສົມ ຫຼື ການປະເມີນຜົນແບບເອກະລາດບໍ່ເປັນໄປຕາມເກນຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນ; ຫຼື
    b. ສະໜອງ IEE ໂດຍໃຊ້ງົບປະມານສາທາລະນະ.
2. ຖ້າເຈົ້າໜ້າທີ່ພິຈາລະນາຕັດສິນວ່າ ການປະເມີນຜົນຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນມີຄວາມເໝາະສົມ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະບໍ່ໄດ້ຈ່າຍຄ່າການປະເມີນຜົນທີ່ທ່ານໄດ້ຮ້ອງຂໍ ຫຼື ຈັດແຈງ. ຢ່າງໃດກໍຕາມ, ທ່ານຍັງມີສິດໃນ IEE ໂດຍທີ່ທ່ານອອກຄ່າໃຊ້ຈ່າຍເອງ.
3. ທ່ານມີສິດໃນ IEE ໂດຍໃຊ້ງົບປະມານຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນໜຶ່ງລາຍການເທົ່ານັ້ນ ໃນແຕ່ລະເທື່ອທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນດຳເນີນການປະເມີນຜົນທີ່ທ່ານບໍ່ເຫັນດີນຳ.

ນອກຈາກສິດຂອງທ່ານພາຍໃຕ້ກົດໝາຍຂອງລັດຖະບານກາງ, ກົດໝາຍຂອງ Massachusetts ຍັງກຳນົດໃຫ້ມີການຄຸ້ມຄອງເພີ່ມເຕີມສຳລັບນັກຮຽນ ແລະ ພໍ່ແມ່ທີ່ກ່ຽວພັນກັບ IEE. ໂດຍສະເພາະແລ້ວ, ທ່ານສາມາດເລືອກບົນພື້ນຖານຄວາມສະໝັກໃຈໃນການແບ່ງປັນຄ່າໃຊ້ຈ່າຍສຳລັບ IEE ໂດຍອີງຕາມເກນຄ່າທຳນຽມແບບເລື່ອນ. ພາຍໃຕ້ມາດຕະຖານຂອງລັດ, ທ່ານຈະໄດ້ຮັບ IEE.

ພາຍໃຕ້ມາດຕະຖານຂອງລັດ, ທ່ານຈະໄດ້ຮັບ IEE ໂດຍໃຊ້ງົບປະມານສາທາລະນະເຕັມ ຫຼື ແບບຮ່ວມຈ່າຍໂດຍອີງຕາມລາຍໄດ້ຂອງທ່ານ. ຖ້າທ່ານເລືອກໃຊ້ທາງເລືອກຂອງລັດ, ໜ່ວຍງານຈະບໍ່ມີທາງເລືອກໃນການສະເໜີຂໍການພິຈາລະນາຕາມຂະບວນການທາງກົດໝາຍ ເພື່ອສະແດງວ່າ ການປະເມີນຜົນລູກຂອງທ່ານນັ້ນເໝາະສົມ. ນັກຮຽນທີ່ມີສິດຮັບອາຫານຟຣີ ຫຼື ໃນມູນຄ່າສ່ວນຫຼຸດ ແລະ ຄອບຄົວທີ່ມີລາຍໄດ້ເທົ່າກັນ ຫຼື ໜ້ອຍກວ່າ 400% ຂອງຄຳແນະນຳດ້ານຄວາມທຸກຍາກຂອງລັດຖະບານກາງ ແມ່ນມີສິດຮັບ IEE ໂດຍໃຊ້ງົບປະມານສາທາລະນະ. ນັກຮຽນຄົນອື່ນ ແມ່ນມີສິດໃນການຮ່ວມຈ່າຍຄ່າ IEE ຕາມເກນຄ່າທຳນຽມແບບເລື່ອນ. ການແບ່ງປັນຂໍ້ມູນທາງການເງິນຂອງທ່ານກັບໜ່ວຍງານເຂດຄຸ້ມຄອງໂຮງຮຽນແມ່ນຂຶ້ນກັບຄວາມສະໝັກໃຈໃນສ່ວນຂອງທ່ານ. ຖ້າທ່ານເລືອກທີ່ຈະແບ່ງປັນຂໍ້ມູນດັ່ງກ່າວ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງແຈ້ງທ່ານຢ່າງເປັນລາຍລັກອັກສອນທັນທີວ່າ ທ່ານມີສິດຮັບທຶນທັງໝົດ ຫຼື ບາງສ່ວນສຳລັບ IEE ບໍ່ ແລະ ຈະດຳເນີນການສະໜອງທຶນສຳລັບ IEE ໂດຍອີງຕາມສິດ. ສິດຂອງທ່ານໃນ IEE ທີ່ໄດ້ຮັບທຶນສາທາລະນະຜ່ານການມີສິດດ້ານລາຍໄດ້ຈະກວມເອົາ 16 ເດືອນ ນັບແຕ່ມື້ດຳເນີນການປະເມີນຜົນໂດຍໜ່ວຍງານເຂດຄຸ້ມຄອງໂຮງຮຽນທີ່ທ່ານບໍ່ເຫັນດີນຳ.

ຖ້າທ່ານບໍ່ບັນລຸຂໍ້ກຳນົດສຳລັບການມີສິດດ້ານລາຍໄດ້, ເລືອກທີ່ຈະບໍ່ເປີດເຜີຍຂໍ້ມູນທາງການເງິນ ຫຼື ທ່ານຕັດສິນໃຈທີ່ຈະບໍ່ນຳໃຊ້ມາດຕະຖານ Massachusetts ຕາມຄວາມສະໝັກໃຈດ້ວຍເຫດຜົນໃດໜຶ່ງ, ໜ່ວຍງານຕ້ອງພິຈາລະນາຄຳຮ້ອງຂໍຂອງທ່ານສຳລັບ IEE ທີ່ໄດ້ຮັບທຶນສາທາລະນະ ພາຍໃຕ້ກົດໝາຍຂອງລັດຖະບານກາງ. ພາຍໃນ 5 ມື້ທີ່ມີການເຂົ້າໂຮງຮຽນ, ໜ່ວຍງານອາດຈະເຫັນດີສະໜອງ IEE

ໃຫ້ໂດຍໃຊ້ງົບປະມານສາທາລະນະ ຫຼື ສະເໜີຂໍໃຫ້ມີການພິຈາລະນາ ທີ່ຫ້ອງການອຸທອນການສຶກສາພິເສດ (Bureau of Special Education Appeals, BSEA) ເພື່ອສະແດງໃຫ້ເຫັນວ່າ ການປະເມີນຜົນທີ່ດຳເນີນໂດຍໜ່ວຍງານແມ່ນຮອບດ້ານ ແລະ ເໝາະສົມ. ລາຍລະອຽດເພີ່ມເຕີມກ່ຽວກັບ IEE ແມ່ນມີຢູ່ໃນບັນທຶກນະໂຍບາຍການສຶກສາພິເສດສຳລັບການໃຫ້ຄຳປຶກສາດ້ານການບໍລິຫານ DESE SY2024-2025.

ທ່ານສາມາດດຳເນີນການປະເມີນຜົນແບບເອກະລາດໄດ້ຕະຫຼອດເວລາ ໂດຍອອກຄ່າໃຊ້ຈ່າຍເອງ. ທ່ານສາມາດມອບຜົນການປະເມີນໃຫ້ແກ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນ. ຖ້າທ່ານແບ່ງປັນຜົນການປະເມີນກັບໜ່ວຍງານເຂດຄຸ້ມຄອງໂຮງຮຽນ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງພິຈາລະນາຜົນການປະເມີນດັ່ງກ່າວ ໃນການຕັດສິນທີ່ກ່ຽວກັບການສະໜອງ FAPE ໃຫ້ລູກຂອງທ່ານ ຖ້າມັນເປັນໄປຕາມເກນຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນສຳລັບ IEE ແລະ ສາມາດນຳໃຊ້ຜົນການປະເມີນໃນການພິຈາລະນາຕາມຂະບວນການທາງກົດໝາຍ.

### 4.2 ຜົນຂອງ IEE ຕ້ອງໄດ້ຮັບການພິຈາລະນາພາຍໃນ 10 ມື້ ໂດຍໜ່ວຍງານເຂດຄຸ້ມຄອງໂຮງຮຽນ

ຖ້າທ່ານໄດ້ຮັບ IEE ຂອງນັກຮຽນຂອງທ່ານໂດຍໃຊ້ງົບປະມານສາທາລະນະ ຫຼື ທ່ານແບ່ງປັນການປະເມີນຜົນນັກຮຽນຂອງທ່ານກັບໜ່ວຍງານເຂດຄຸ້ມຄອງໂຮງຮຽນ ເຊິ່ງເປັນການປະເມີນຜົນທີ່ທ່ານໄດ້ຮັບຈາກການອອກຄ່າໃຊ້ຈ່າຍເອງ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານຕ້ອງຈັດການປະຊຸມຂອງທີມງານພາຍໃນສິບວັນລັດຖະການຫຼັງໄດ້ຮັບຂໍ້ມູນການປະເມີນຜົນ ໂດຍບໍ່ຄຳນຶງວ່າ ນັກຮຽນມີ IEP ຫຼື ບໍ່. ໜ່ວຍງານມີຄວາມຮັບຜິດຊອບໃນການພິຈາລະນາອົງປະກອບດ້ານການສຶກສາຂອງ IEE. ທີມງານຈະພິຈາລະນາຜົນການປະເມີນ ແລະ ກຳນົດການປ່ຽນແປງທີ່ຄວນມີກັບ IEP ຂອງນັກຮຽນຂອງທ່ານ ຖ້າຫາກວ່າມີ ຫຼື ທີ່ຄວນມີກັບຂັ້ນຕອນການກຳນົດສິດ ເພື່ອຮັບປະກັນວ່າ ມີການພິຈາລະນາຜົນໄດ້ຮັບຂອງ IEE ຢ່າງເໝາະສົມ ແລະ ໃນເວລາທີ່ສົມຄວນ.

## 5. ທ່ານສາມາດເບິ່ງບັນທຶກນັກຮຽນຂອງນັກຮຽນຂອງທ່ານເມື່ອໃດ? 34 CFR 300.611 ແລະ 603 CMR 23.00

ບັນທຶກນັກຮຽນປະກອບມີຄະແນນ ແລະ ບັນທຶກໂຮງຮຽນແບບຊົ່ວຄາວຂອງນັກຮຽນຂອງທ່ານ ແລະ ມີບັນທຶກສຸຂະພາບ, ການສອບເສັງ, ການປະເມີນຜົນ, ບັນທຶກທາງວິໄນ ແລະ ບັນທຶກອື່ນໆ ທີ່ກ່ຽວກັບສິດ ຫຼື ຫຼັກສູດການສຶກສາພິເສດຂອງນັກຮຽນ.[3] ຂໍ້ມູນປະຈຳຕົວບຸກຄົນທີ່ກ່ຽວກັບນັກຮຽນແມ່ນເປັນຄວາມລັບ ແລະ ບໍ່ສາມາດເປີດເຜີຍໃຫ້ຜູ້ໃດກໍຕາມໂດຍບໍ່ມີການຍິນຍອມຂອງທ່ານ ນອກຈາກຄູ ແລະ ເຈົ້າໜ້າທີ່ສຶກສາ.

ທ່ານ ແລະ ນັກຮຽນຂອງທ່ານ (ຖ້ານັກຮຽນຂອງທ່ານມີອາຍຸ 14 ປີຂຶ້ນໄປ) ມີສິດເບິ່ງພາກສ່ວນໃດໜຶ່ງ ຫຼື ທຸກພາກສ່ວນຂອງບັນທຶກຂອງນັກຮຽນພາຍໃນ 10 ວັນ ຫຼັງທ່ານໄດ້ຂໍເບິ່ງ ແລະ ກ່ອນການປະຊຸມ IEP ຫຼື ການພິຈາລະນາຕາມຂະບວນການທາງກົດໝາຍ.[4] ນອກຈາກ ນັ້ນ, ທ່ານຍັງສາມາດເອົາສຳເນົາຂໍ້ມູນຕາມການສະເໜີຂໍໂດຍທີ່ຈ່າຍຄ່າສຳເນົາໃນມູນຄ່າທີ່ສົມເຫດສົມຜົນ ເຊິ່ງຈຳກັດສະເພາະທີ່ຄ່າເຮັດສຳເນົາ. ຈະບໍ່ມີການຮຽກເກັບເງິນກັບທ່ານ ສຳລັບການຊອກຫາ ແລະ ການກູ້ເອົາບັນທຶກຂອງນັກຮຽນຂອງທ່ານ.

---

[3] ຖ້າພໍ່ແມ່ຂອງນັກຮຽນຖອນການຍິນຍອມຂອງເຂົາເຈົ້າ ສຳລັບການບໍລິການສຶກສາພິເສດພາຍຫຼັງໄດ້ມີການສະໜອງການບໍລິການໃນເບື້ອງຕົ້ນໃຫ້ແລ້ວ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ຈຳເປັນຕ້ອງແກ້ໄຂບັນທຶກຂອງນັກຮຽນ ເພື່ອທີ່ຈະເອົາການແນະນຳການບໍລິການສຶກສາພິເສດອອກ.

[4] ໜ່ວຍງານເຂດຄຸ້ມຄອງໂຮງຮຽນສາມາດຈຳກັດການເຂົ້າເຖິງບັນທຶກຂອງນັກຮຽນ ຖ້າໜ່ວຍງານໄດ້ຮັບເອກະສານທາງກົດໝາຍເທົ່ານັ້ນ ເຊັ່ນ: ຄຳສັ່ງຫ້າມ ຫຼື ໃບຢ່າຮ້າງ ຫຼື ອຳນາດຄຸ້ມຄອງ ທີ່ຈຳກັດການເຂົ້າເຖິງຂໍ້ມູນກ່ຽວກັບນັກຮຽນ.

ນອກຈາກນັ້ນ, ທ່ານສາມາດພົບບຸກຄະລາກອນໂຮງຮຽນທີ່ມີຄຸນສົມບັດດ້ານວິຊາຊີບເພື່ອທີ່ຈະໃຫ້ມີການອະທິບາຍກ່ຽວກັບບັນທຶກ. ທ່ານຍັງສາມາດໃຫ້ຜູ້ຕາງໜ້າ (ນັກກົດໝາຍ, ທີ່ປຶກສາ ຫຼື ທະນາຍຄວາມ) ຂອງທ່ານກວດກາ, ກວດສອບ ແລະ ຕີຄວາມໝາຍບັນທຶກຂອງນັກຮຽນ ຖ້າທ່ານໃຫ້ການຍິນຍອມທີ່ເປັນລາຍລັກອັກສອນ ແລະ ມີຄວາມສະເພາະ. ສິດທັງໝົດທີ່ກ່ຽວພັນກັບບັນທຶກຂອງນັກຮຽນແມ່ນຢູ່ໃນລະບຽບການສໍາລັບບັນທຶກຂອງນັກຮຽນໃນ Massachusetts 603 CMR 23.00 (Massachusetts Student Record Regulations 603 CMR 23.00). ລະບຽບການເຫຼົ່ານັ້ນແມ່ນມີຢູ່ໃນ http://www.doe.mass.edu/lawsregs/603cmr23.html ຫຼື ໂດຍການສະເໜີຂໍສໍາເນົາລະບຽບການຕ່າງໆຈາກໜ່ວຍງານເຂດຄຸ້ມຄອງໂຮງຮຽນ ຫຼື DESE.

ໂດຍທົ່ວໄປແລ້ວ, ມີພຽງພໍ່ແມ່, ນັກຮຽນທີ່ມີສິດ, ບຸກຄະລາກອນຂອງໂຮງຮຽນທີ່ໄດ້ຮັບອະນຸຍາດ ແລະ ເຈົ້າໜ້າທີ່ສຶກສາຂອງລັດ ແລະ ລັດຖະບານກາງ ແມ່ນໄດ້ຮັບອະນຸຍາດໃຫ້ເບິ່ງບັນທຶກຂອງນັກຮຽນໂດຍບໍ່ຕ້ອງມີການຍິນຍອມຂອງພໍ່ແມ່ ຫຼື ນັກຮຽນຜູ້ໃຫຍ່ທີ່ມີຄວາມສະເພາະເຈາະຈົງ, ມີການແຈ້ງໃຫ້ຊາບ ແລະ ເປັນລາຍລັກອັກສອນ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນອາດ ຈະຕ້ອງສະໜອງຂໍ້ມູນຈໍານວນໜຶ່ງໃຫ້ເຈົ້າໜ້າທີ່ຂອງລັດ ແລະ ລັດຖະບານກາງ ເຊິ່ງເປັນຜົນມາຈາກຄໍາສັ່ງຂອງສານ ຫຼື ເພື່ອຕອບສະໜອງຕໍ່ບັນຫາທາງສຸຂະພາບ ແລະ ຄວາມປອດໄພ ຫຼື ການບັງຄັບໃຊ້ກົດໝາຍ. ຂໍ້ມູນທີ່ມີປະໂຫຍດ ກ່ຽວກັບສິ່ງເຫຼົ່ານີ້ ແລະ ບັນຫາກ່ຽວກັບບັນທຶກຂອງນັກຮຽນແມ່ນສາມາດເບິ່ງໄດ້ໃນ http://www.doe.mass.edu/lawsregs/advisory/cmr23qanda.html.

## 6. ພໍ່ແມ່ ແລະ ໂຮງຮຽນສາມາດແກ້ໄຂຂໍ້ຂັດແຍ່ງໄດ້ແນວໃດ?

**34 C.F.R. 300.151-300.153, 300.506 – 300.518 ແລະ 603 CMR 28.08**

ພໍ່ແມ່/ຜູ້ປົກຄອງ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນ ແມ່ນແມ່ນໄດ້ຮັບການຊຸກຍູ້ໃຫ້ເຮັດວຽກຮ່ວມກັນເພື່ອແກ້ໄຂຂໍ້ຂັດແຍ່ງ. ກົດໝາຍວ່າດ້ວຍການສຶກສາສໍາລັບບຸກຄົນທີ່ມີຄວາມພິການ (Individuals with Disabilities Education Act, IDEA) ພາກ B, ລະບຽບການກ່ຽວກັບການຈັດຕັ້ງປະຕິບັດຂອງກົດໝາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສຶກສາພິເສດຂອງລັດ ແມ່ນມີທາງເລືອກໃຫ້ທ່ານເພື່ອແກ້ໄຂຂໍ້ຂັດແຍ່ງກັບໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານ ຫຼື ໜ່ວຍງານສາທາລະນະອື່ນທີ່ຮັບຜິດຊອບ. ສິ່ງຕໍ່ໄປນີ້ອະທິບາຍກ່ຽວກັບຂະບວນການຕ່າງໆທີ່ມີໃຫ້ພໍ່ແມ່/ຜູ້ປົກຄອງ ແລະ ໜ່ວຍງານສາທາລະນະໃນການແກ້ໄຂຂໍ້ຂັດແຍ່ງທີ່ກ່ຽວກັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ລວມທັງສິດຂອງເດັກນ້ອຍ. ທາງເລືອກໃນການແກ້ໄຂຂໍ້ຂັດແຍ່ງພາຍໃນ Massachusetts ປະກອບມີການໄກ່ເກ່ຍ, ການຍື່ນຄໍາຮ້ອງຮຽນຕໍ່ລັດກັບຫ້ອງການລະບົບແກ້ໄຂບັນຫາ (Problem Resolution System Office) ຂອງ DESE ແລະ ການຍື່ນຄໍາຮ້ອງຂໍການພິຈາລະນາຕາມຂະບວນການທາງກົດໝາຍໃຫ້ກັບຫ້ອງການອຸທອນການສຶກສາພິເສດ (Bureau of Special Education Appeals). ສິ່ງຕໍ່ໄປນີ້ຈະອະທິບາຍກ່ຽວກັບແຕ່ລະທາງເລືອກຢ່າງລະອຽດ.

ນັກຮຽນຂອງທ່ານຈະຍັງຄົງຢູ່ໃນຫຼັກສູດການສຶກສາ ແລະ ການຊັບຊ້ອນປະຈຸບັນຂອງຜູ້ກ່ຽວໃນຂະຫວ່າງທີ່ມີຂໍ້ຂັດແຍ່ງກ່ຽວກັບການຊັບຊ້ອນ ຫຼື ການບໍລິການ, ເວັ້ນແຕ່ວ່າທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະຕົກລົງກັນເປັນຢ່າງອື່ນ ຫຼື ໄດ້ມີການປ່ຽນການຊັບຊ້ອນນັກຮຽນຂອງທ່ານເນື່ອງຈາກເລື່ອງລະບຽບວິໄນ.

### 6.1 ການນໍາສະເໜີຂໍ້ຂັດແຍ່ງຕໍ່ເຈົ້າໜ້າທີ່ຂອງໂຮງຮຽນທ້ອງຖິ່ນ

ການເຮັດວຽກຮ່ວມກັນ ໃນລະຫວ່າງທີ່ມີຂໍ້ຂັດແຍ່ງແມ່ນຍຸດທະສາດທີ່ດີ ໃນການຮັກສາຄວາມສໍາພັນທາງການເຮັດວຽກທີ່ເຂັ້ມແຂງ

ລະຫວ່າງເຮືອນ ແລະ ໂຮງຮຽນ. ເພື່ອແກ້ໄຂຂໍ້ຂັດແຍ່ງ, ພໍ່ແມ່/ຜູ້ປົກຄອງຄວນປຶກສາກັບໂຮງຮຽນ ແລະ ຜູ້ນໍາຂອງໜ່ວຍງານກ່ຽວກັບຄວາມກັງວົນຂອງເຂົາເຈົ້າ. ບາງເທື່ອມັນຍາກທີ່ຈະລະບຸວ່າ ໃຜແມ່ນຜູ້ທີ່ເໝາະສົມທີ່ຈະລົມນໍາພາຍໃນອົງການຈັດຕັ້ງທາງການສຶກສາ. ບຸກຄົນໃນບົດບາດເຫຼົ່ານີ້ມັກມີປະໂຫຍດຕໍ່ພໍ່ແມ່/ຜູ້ປົກຄອງໃນການແກ້ໄຂຂໍ້ຂັດແຍ່ງ.

- ຄູຂອງນັກຮຽນຂອງທ່ານ ຫຼື ຜູ້ໃຫ້ບໍລິການ;
- ຜູ້ອໍານວຍການ ຫຼື ຜູ້ຊ່ວຍຜູ້ອໍານວຍການໂຮງຮຽນ;
- ຜູ້ອໍານວຍການສຶກສາພິເສດ, ຜູ້ບໍລິຫານການສຶກສາພິເສດ ຫຼື ຜູ້ອໍານວຍການຝ່າຍບໍລິການນັກຮຽນ;
- ຜູ້ດູແລ (ຫຼື ຜູ້ນໍາໂຮງຮຽນພາຍໃຕ້ການເບິ່ງແຍງຂອງລັດ, ຖ້າເປັນໂຮງຮຽນພາຍໃຕ້ການເບິ່ງແຍງຂອງລັດ).

ທ່ານສາມາດຊອກຫາຂໍ້ມູນການຕິດຕໍ່ສໍາລັບບຸກຄົນເຫຼົ່ານີ້ຢູ່ເວັບໄຊຂອງໜ່ວຍງານຂອງທ່ານ ຫຼື ຢູ່ໃນເວັບໄຊໂປຣໄຟລ໌ໜ່ວຍງານ DESE ທີ່ມີລິ້ງຢູ່ບ່ອນນີ້.

### 6.2 ລະບົບຮ້ອງຮຽນຕໍ່ລັດຂອງ DESE

ອົງການຈັດຕັ້ງ ຫຼື ບຸກຄົນ, ລວມທັງໜຶ່ງພາກສ່ວນຈາກລັດອື່ນ, ສາມາດຍື່ນຄໍາຮ້ອງຮຽນຕໍ່ລັດກັບລະບົບແກ້ໄຂບັນຫາຂອງ DESE (Problem Resolution System, PRS). ເພື່ອທີ່ຈະໃຫ້ PRS ດໍາເນີນການກວດສອບ, ຄໍາຮ້ອງຮຽນຕໍ່ລັດທີ່ເປັນລາຍລັກອັກສອນຕ້ອງເປັນໄປຕາມເກນສະເພາະທີ່ກໍານົດໂດຍລະບຽບການ IDEA ພາກ B. ຄໍາຮ້ອງຮຽນທີ່ເປັນລາຍລັກອັກສອນຕ້ອງມີຂໍ້ມູນສະເພາະທີ່ກໍານົດໂດຍລະບຽບການ IDEA ພາກ B ເພື່ອທີ່ຈະຖືວ່າມີຄວາມພຽງພໍ. ຄໍາຮ້ອງຮຽນຕໍ່ລັດຕ້ອງມີ:

- ຄໍາຖະແຫຼງທີ່ລະບຸວ່າ ໜ່ວຍງານສາທາລະນະໄດ້ລະເມີດ IDEA ພາກ B, ລະບຽບການຈັດຕັ້ງປະຕິບັດ ຫຼື ກົດໝາຍ ຫຼື ລະບຽບການສຶກສາພິເສດຂອງລັດ ເຖິງວ່າຜູ້ຮ້ອງຮຽນຈະບໍ່ຈໍາເປັນຕ້ອງອ້າງອີງເຖິງຂໍ້ບັນຍັດສະເພາະໃນກົດໝາຍ ຫຼື ລະບຽບການ;
- ຂໍ້ເທັດຈິງທີ່ຄໍາຖະແຫຼງໄດ້ອີງຕາມ;
- ລາຍເຊັນ ແລະ ຂໍ້ມູນການຕິດຕໍ່ສໍາລັບບຸກຄົນທີ່ປະກອບຄໍາຮ້ອງຮຽນ; ແລະ
- ຖ້າຄໍາຮ້ອງຮຽນຕໍ່ລັດໄດ້ເຮັດການກ່າວຫາເຖິງການລະເມີດ ເຊິ່ງກ່ຽວກັບເດັກນ້ອຍສະເພາະ:
- ○ ຊື່ ແລະ ທີ່ຢູ່ຂອງທີ່ພັກອາໄສຂອງເດັກນ້ອຍ;
- ○ ຊື່ໂຮງຮຽນທີ່ເດັກນ້ອຍເຂົ້າ;
- ○ ໃນກໍລະນີເປັນເດັກນ້ອຍ ຫຼື ເຢົາວະຊົນທີ່ບໍ່ມີເຮືອນຢູ່ ແມ່ນໃຫ້ລະບຸຂໍ້ມູນການຕິດຕໍ່ທີ່ມີຢູ່ສໍາລັບເດັກນ້ອຍ ແລະ ຊື່ໂຮງຮຽນທີ່ເດັກນ້ອຍເຂົ້າ;
- ○ ລາຍລະອຽດກ່ຽວກັບລັກສະນະຂອງບັນຫາຂອງເດັກນ້ອຍ, ລວມທັງຂໍ້ມູນແທ້ຈິງກ່ຽວກັບບັນຫາ; ແລະ
- ○ ການແກ້ໄຂບັນຫາທີ່ໄດ້ສະເໜີຕາມຂອບເຂດທີ່ຮູ້ ແລະ ທີ່ມີໃຫ້ພາກສ່ວນທີ່ກ່ຽວຂ້ອງໃນເວລາທີ່ໄດ້ຍື່ນຄໍາຮ້ອງຮຽນຕໍ່ລັດ.

ຄໍາຮ້ອງຮຽນຕໍ່ລັດຕ້ອງກ່າວຫາເຖິງການລະເມີດ ທີ່ໄດ້ເກີດຂຶ້ນໃນຊ່ວງເວລາທີ່ບໍ່ກາຍໜຶ່ງປີກ່ອນທີ່ PRS ຈະໄດ້ຮັບຄໍາຮ້ອງຮຽນ. ຄໍາຮ້ອງຮຽນຕໍ່ລັດຕ້ອງຍື່ນໃຫ້ກັບ PRS ແລະ ບຸກຄົນ ຫຼື ນອກຈາກນັ້ນ ອົງການຈັດຕັ້ງທີ່ຍື່ນຄໍາຮ້ອງຮຽນຕໍ່ລັດ ຕ້ອງສົ່ງສໍາເນົາຄໍາຮ້ອງຮຽນໃຫ້ໜ່ວຍງານເຂດຄຸ້ມຄອງໂຮງຮຽນ ຫຼື ໜ່ວຍງານສາທາລະນະອື່ນໆໃນເວລາດຽວກັນ.

ເພື່ອຊ່ວຍກັບການຍື່ນຄໍາຮ້ອງຮຽນຕໍ່ລັດ, ທ່ານສາມາດເຂົ້າຫາແບບຟອມຄໍາຮ້ອງອີເລັກໂທຣນິກສໍາລັບການສົ່ງຄໍາຮ້ອງຮຽນຕໍ່ລັດທາງອີເລັກໂທຣນິກຢູ່ໃນເວັບໄຊຂອງ DESE ທີ່ https://www.doe.mass.edu/prs/. ນອກຈາກແບບຟອມຄໍາຮ້ອງທາງອອນລາຍ, PRS ຍັງຮັບເອົາຄໍາ

ຮ້ອງຮຽນທີ່ສົ່ງຜ່ານທາງແຟັກ, ອີເມວ, ໄປສະນີສະຫະລັດ ແລະ ທີ່ສົ່ງດ້ວຍຕົວເອງ ໄປຫາທີ່ຢູ່ຕາມຂໍ້ມູນການຕິດຕໍ່ຕໍ່ໄປນີ້:

Problem Resolution System Office
Massachusetts Department of Elementary and Secondary Education
135 Santilli Highway – Everett, MA 02149
Main Telephone: 781-338-3700
TTY: N.E.T. Relay: 1-800-439-
2370 ແຟັກ: 781-338-3710
Email: DESECompliance@mass.gov

ບໍ່ຈຳເປັນທີ່ທ່ານຈະຕ້ອງໃຊ້ແບບຟອມຂອງ DESE ເພື່ອຍື່ນຄຳຮ້ອງຮຽນຕໍ່ລັດ. ຢ່າງໃດກໍຕາມ, ຄຳຮ້ອງຮຽນຕໍ່ລັດຂອງທ່ານຕ້ອງປະກອບມີອົງປະກອບຕ່າງໆທີ່ກຳນົດໂດຍ 34 C.F.R. § 300.153(b) ແລະ ທີ່ໄດ້ອະທິບາຍຂ້າງເທິງ ເພື່ອທີ່ຈະສາມາດຖືໄດ້ວ່າມີຄວາມພຽງພໍ. ແບບຟອມຄຳຮ້ອງສະບັບຕົວຢ່າງແມ່ນແປເປັນພາສາອາຣັບ, ເຄບແວດ, ຈີນ, ເຮຕິ ເຄຣໂອເລ, ຂະເໝນ, ປໍຕຸຍການ, ຣັດເຊຍ, ສະເປນ ແລະ ຫວຽດນາມ ແລະ ອາດຈະມີການແປເປັນພາສາອື່ນຕາມການສະເໜີຂໍ. ນອກຈາກນັ້ນ, ທ່ານຍັງສາມາດໂທຫາ PRS ໄດ້ທີ່ 781-338-3700 ເພື່ອໃຫ້ຊ່ວຍທ່ານກັບການຍື່ນຄຳຮ້ອງຮຽນ. ຂະບວນການລະອຽດທີ່ PRS ນຳໃຊ້ໃນເວລາດຳເນີນການຄຳຮ້ອງຮຽນຕໍ່ລັດແມ່ນມີຢູ່ໃນ: https://www.doe.mass.edu/prs/.

ພາຍຫຼັງໄດ້ຮັບຄຳຮ້ອງຮຽນທີ່ເປັນໄປຕາມຂໍ້ກຳນົດທີ່ໄດ້ລະບຸຂ້າງເທິງ, PRS ຕ້ອງອອກຄຳຕັດສິນຢ່າງເປັນລາຍລັກອັກສອນ ທີ່ມີຜົນການຄົ້ນຄວ້າຂໍ້ເທັດຈິງ ແລະ ບົດສະຫຼຸບພາຍໃນ 60 ວັນຕາມປະຕິທິນ ຫຼັງມື້ຮັບຄຳຮ້ອງຮຽນຕໍ່ລັດ ແລະ ສາມາດຂະຫຍາຍເວລາໄດ້ 60 ວັນເທົ່ານັ້ນ ຖ້າຫາກວ່າ:

- ມີສະຖານະການພິເສດກ່ຽວກັບຄຳຮ້ອງຮຽນສະເພາະ; ຫຼື
- ພໍ່ແມ່ ແລະ ໜ່ວຍງານສາທາລະນະທີ່ກ່ຽວຂ້ອງເຫັນດີຢ່າງສະໝັກໃຈໃນການຂະຫຍາຍເວລາ ເພື່ອພະຍາຍາມໄກ່ເກ່ຍ ຫຼື ນຳໃຊ້ວິທີການອື່ນໃນການແກ້ໄຂຂໍ້ຂັດແຍ່ງໂດຍທີ່ລັດເປັນຜູ້ຊ່ວຍເຫຼືອ.

ໃນເວລາດຳເນີນການຄຳຮ້ອງຮຽນຕໍ່ລັດ, ຢ່າງໜ້ອຍສຸດ PRS ຈະ:

- ໃຫ້ໂອກາດແກ່ຜູ້ຮ້ອງຮຽນ ເພື່ອທີ່ຈະຍື່ນຂໍ້ມູນເພີ່ມເຕີມດ້ວຍທາງວາຈາ ຫຼື ຢ່າງເປັນລາຍລັກອັກສອນກ່ຽວກັບການກ່າວຫາທີ່ລະບຸໃນຄຳຮ້ອງຮຽນຕໍ່ລັດ;
- ໃຫ້ໂອກາດແກ່ໜ່ວຍງານສາທາລະນະໃນການຕອບກັບຄຳຮ້ອງຮຽນ, ລວມທັງການສະເໜີແກ້ໄຂຄຳຮ້ອງຮຽນ ແລະ ໃຫ້ໂອກາດແກ່ຄູ່ກໍລະນີໃນການໄກ່ເກ່ຍຢ່າງສະໝັກໃຈໂດຍສອດຄ່ອງກັບ 34 C.F.R. § 300.506;
- ດຳເນີນການກວດສອບຢູ່ສະຖານທີ່ແບບເອກະລາດ, ຖ້າມີການກຳນົດວ່າມີຄວາມຈຳເປັນ;
- ກວດສອບຂໍ້ມູນທີ່ກ່ຽວຂ້ອງທັງໝົດ ແລະ ເຮັດການຕັດສິນແບບເອກະລາດວ່າ ໜ່ວຍງານສາທາລະນະໄດ້ລະເມີດຂໍ້ກຳນົດຂອງກົດໝາຍ ຫຼື ລະບຽບການພິເສດຂອງລັດຖະບານກາງ ຫຼື ຂອງລັດບໍ່; ແລະ
- ອອກຄຳຕັດສິນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຮຽນ ແລະ ໜ່ວຍງານສາທາລະນະ ເຊິ່ງແກ້ໄຂຂໍ້ກ່າວຫາແຕ່ລະຂໍ້ໃນຄຳຮ້ອງຮຽນຕໍ່ລັດ ແລະ ມີຜົນການຄົ້ນຄວ້າຂໍ້ເທັດຈິງ ແລະ ບົດສະຫຼຸບ ແລະ ເຫດຜົນຂອງຄຳຕັດສິນທີ່ເດັດຂາດຂອງ PRS.

ນອກຈາກນັ້ນ, ຄຳຕັດສິນຍັງກຳນົດຂໍ້ກຳນົດການແກ້ໄຂ ຖ້າຫາກວ່າເໝາະສົມ ແລະ ມີຂະບວນການຈັດຕັ້ງປະຕິບັດຄຳຕັດສິນທີ່ເດັດຂາດໃຫ້ມີປະສິດທິພາບ ຖ້າຫາກວ່າຈຳເປັນ. ຖ້າ PRS ຕັດສິນວ່າໜ່ວຍງານສາທາລະນະບໍ່ໄດ້ໃຫ້ບໍລິການທີ່ເໝາະສົມ, ຄຳຕັດສິນທີ່ເປັນລາຍລັກອັກສອນສະບັບສຸດທ້າຍອາດປະກອບມີການແກ້ໄຂ ທີ່ໜ່ວຍງານສາທາລະນະຕ້ອງດຳເນີນ ເພື່ອແກ້ໄຂສິ່ງທີ່ບໍ່ໄດ້ປະຕິບັດຕາມທີ່ໄດ້ລະບຸ, ໃຫ້ຊົດເຊີຍແກ່ນັກຮຽນ ຫຼື ເຮັດທັງສອງຢ່າງ ແລະ ຕ້ອງ:

- ແກ້ໄຂການທີ່ບໍ່ສາມາດໃຫ້ບໍລິການທີ່ເໝາະສົມ, ລວມທັງດຳເນີນການແກ້ໄຂທີ່ເໝາະສົມຕໍ່ຄວາມຕ້ອງການຂອງເດັກນ້ອຍ (ເຊັ່ນ: ການບໍລິການຊົດເຊີຍ ຫຼື ການຊົດເຊີຍເປັນເງິນ); ແລະ
- ສະໜອງການບໍລິການທີ່ເໝາະສົມໃນອະນາຄົດໃຫ້ນັກຮຽນທຸກຄົນທີ່ມີຄວາມພິການ.

ການດຳເນີນການແກ້ໄຂອາດປະກອບມີ ແຕ່ບໍ່ຈຳກັດສະເພາະການຝຶກອົບຮົມພະນັກງານ, ຂໍ້ກຳນົດການລາຍງານເພີ່ມເຕີມ, ການປ່ຽນແປງນະໂຍບາຍ, ການມອບເງິນ ແລະ ການບໍລິການຊົດເຊີຍ. ໃນກໍລະນີຄຳຮ້ອງຮຽນທີ່ກ່ຽວກັບນັກຮຽນລາຍບຸກຄົນທີ່ PRS ບໍ່ພົບເຫັນການກະທຳຜິດ, ການດຳເນີນການແກ້ໄຂອາດປະກອບມີການກວດສອບແບບລະອຽດ (ເຊັ່ນ: ການກວດສອບບັນທຶກ, ອື່ນໆ) ຂອງນັກຮຽນທີ່ມີຄວາມຄ້າຍຄືກັນ ເພື່ອກຳນົດຄວາມຕ້ອງການສຳລັບການແຊກແຊງແບບເປັນລະບົບໃນຕໍ່ໜ້າໂດຍພະແນກ ຖ້າຫາກວ່າມີ.

ຄູ່ກໍລະນີຄວນສືບຕໍ່ເຮັດວຽກຮ່ວມກັນ ເພື່ອແກ້ໄຂຂໍ້ຂັດແຍ່ງ ລວມທັງໃນຂະນະທີ່ກຳລັງລໍຖ້າຄຳຮ້ອງຮຽນຕໍ່ລັດ. ການຍື່ນຄຳຮ້ອງຮຽນຕໍ່ລັດກັບ PRS ຈະບໍ່ສະກັດກັ້ນທ່ານຈາກການນຳໃຊ້ວິທີການແກ້ໄຂຂໍ້ຂັດແຍ່ງແບບອື່ນເຊັ່ນ: ການໄກ່ເກ່ຍ ຫຼື ການພິຈາລະນາຕາມຂະບວນການທາງກົດໝາຍຢູ່ທີ່ຫ້ອງການອຸທອນການສຶກສາພິເສດ (ລາຍລະອຽດດ້ານລຸ່ມ) ເພື່ອແກ້ໄຂຄວາມກັງວົນຂອງທ່ານ.

ຖ້າຄຳຮ້ອງຮຽນຕໍ່ລັດ ທີ່ເປັນສ່ວນໜຶ່ງຂອງການພິຈາລະນາຕາມຂະບວນການທາງກົດໝາຍ ມີຫຼາຍບັນຫາເຊິ່ງໜຶ່ງບັນຫາ ຫຼື ຫຼາຍບັນຫາແມ່ນເປັນສ່ວນໜຶ່ງຂອງການພິຈາລະນາຕາມຂະບວນການທາງກົດໝາຍ, PRS ຕ້ອງແຍກພາກສ່ວນຂອງຄຳຮ້ອງຮຽນຕໍ່ລັດທີ່ມີການແກ້ໄຂໃນການພິຈາລະນາຕາມຂະບວນການທາງກົດໝາຍຈົນກວ່າຈະມີບົດສະຫຼຸບຂອງການພິຈາລະນາຕາມຂະບວນການທາງກົດໝາຍ. ຢ່າງໃດກໍຕາມ, ບັນຫາໃດໆໃນຄຳຮ້ອງຮຽນຕໍ່ລັດ ທີ່ບໍ່ແມ່ນສ່ວນໜຶ່ງຂອງການພິຈາລະນາຕາມຂະບວນການທາງກົດໝາຍຕ້ອງໄດ້ຮັບການແກ້ໄຂໂດຍນຳໃຊ້ກຳນົດເວລາ ແລະ ຂະບວນການທີ່ອະທິບາຍຂ້າງເທິງ. ຖ້າມີການຍົກບັນຫາໃນຄຳຮ້ອງຮຽນຕໍ່ລັດ ທີ່ກ່ອນໜ້ານີ້ຖືກຕັດສິນໃນການພິຈາລະນາຕາມຂະບວນການທາງກົດໝາຍ ເຊິ່ງກ່ຽວຂ້ອງກັບຄູ່ກໍລະນີດຽວກັນ, ຄຳຕັດສິນຈາກການພິຈາລະນາແມ່ນມີຜົນຜູກມັດ ແລະ PRS ຈະແຈ້ງຜູ້ຮ້ອງຮຽນຕາມເຊັ່ນນັ້ນ.[1]

### 6.3 ການຂໍໃຫ້ມີການແຕ່ງຕັ້ງຜູ້ໄກ່ເກ່ຍທີ່ເປັນກາງ

ການໄກ່ເກ່ຍ[5] ແມ່ນການບໍລິການທີ່ສະໜອງໂດຍບຸກຄົນທີ່ເປັນກາງ ທີ່ໄດ້ຮັບການຝຶກອົບຮົມດ້ານກົດໝາຍການສຶກສາພິເສດ ແລະ ດ້ານວິທີການເຈລະຈາ. ການໄກ່ເກ່ຍແມ່ນສາມາດກຳນົດເວລາໄດ້ເມື່ອພໍ່ແມ່ ແລະ ໂຮງຮຽນມີຂໍ້ຂັດແຍ່ງກັນກ່ຽວກັບບັນຫາການສຶກສາພິເສດ ເຖິງວ່າຈະມີການຮ້ອງຮຽນຜ່ານລະບົບແກ້ໄຂບັນຫາ PRS ກໍຕາມ. ຜູ້ໄກ່ເກ່ຍຈະຊ່ວຍພໍ່ແມ່ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນໃນການປຶກສາກ່ຽວກັບຂໍ້ຂັດແຍ່ງຂອງເຂົາເຈົ້າ ແລະ ເພື່ອໃຫ້ມີຂໍ້ຕົກລົງທີ່ທັງສອງຝ່າຍສາມາດຍອມຮັບໄດ້. ການປຶກສາຫາລືລະຫວ່າງການໄກ່ເກ່ຍຈະເປັນຄວາມລັບ ແລະ ສິ່ງທີ່ທັງສອງກ່າວຈະບໍ່ຖືກນຳໃຊ້ໃນພາຍຫຼັງ ຖ້າຂໍ້ຂັດແຍ່ງໄດ້ກາຍເປັນບັນຫາຂອງການພິຈາລະນາຢ່າງເປັນທາງການ ຫຼື ການດຳເນີນຄະດີຂອງສານ. ເມື່ອມີຂໍ້ຕົກລົງກັນ, ຂໍ້ຕົກລົງດັ່ງກ່າວຈະຖືກສ້າງເປັນລາຍລັກອັກສອນ ເຊິ່ງທັງສອງຝ່າຍຈະລົງນາມ ແລະ ອາດຈະມີການບັງຄັບໃຊ້ໂດຍສານ.

ສາມາດກຳນົດການໄກ່ເກ່ຍໂດຍການຕິດຕໍ່ BSEA ທີ່ 781-397-4750. ຜູ້ໄກ່ເກ່ຍຈະກຳນົດການປະຊຸມກັບທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນພາຍໃນ 30 ວັນ ຫຼັງມີການສະເໜີຂໍການໄກ່ເກ່ຍ. ປະຊຸມຈະຖືກຈັດຂຶ້ນຕາມເວລາ ແລະ ຢູ່ສະຖານທີ່ທີ່ສະດວກ. ການເຂົ້າຮ່ວມແມ່ນຕາມຄວາມສະໝັກໃຈ, ສະນັ້ນ ທັງໜ່ວຍງານເຂດຄຸ້ມຄອງໂຮງຮຽນ ແລະ ພໍ່ແມ່ຕ້ອງເຫັນດີເຂົ້າຮ່ວມໃນການໄກ່ເກ່ຍ. ບໍ່ມີຄ່າທຳນຽມສຳລັບການບໍລິການດັ່ງກ່າວ.

ຂໍ້ມູນເພີ່ມເຕີມກ່ຽວກັບວິທີໄກ່ເກ່ຍແມ່ນສາມາດເອົາກັບ 781-397-4750 ແລະ ສາມາດອ່ານໄດ້ໃນສື່ພິມຂອງເຂົາເຈົ້າ "ຄຳຖາມທີ່ມີການຖາມເປັນປະຈຳກ່ຽວກັບການໄກ່ເກ່ຍ" ແລະ ສຶກສາເພີ່ມເຕີມກ່ຽວກັບການໄກ່ເກ່ຍຢູ່ທີ່ BSEA.[6]"

### 6.4 ການສະເໜີຂໍການພິຈາລະນາຕາມຂະບວນການທາງກົດໝາຍ ແລະ ການເຂົ້າຮ່ວມໃນກອງປະຊຸມແກ້ໄຂ

ຖ້າທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ສາມາດຕົກລົງກັນໄດ້, ທ່ານມີສິດທີ່ຈະຂໍໃຫ້ເຈົ້າໜ້າທີ່ພິຈາລະນາທີ່ເປັນກາງ ແລະ ບໍ່ລຳອຽງຮັບຟັງຂໍ້ຂັດແຍ່ງຈາກທັງສອງຝ່າຍ, ຮັບຟັງຄຳໃຫ້ການ, ກວດສອບຫຼັກຖານ ແລະ ເຮັດການຕັດສິນ. ການພິຈາລະນານີ້ແມ່ນດຳເນີນໂດຍ BSEA ແລະ ເອີ້ນວ່າການພິຈາລະນາຕາມຂະບວນການທາງກົດໝາຍ. ເຈົ້າໜ້າທີ່ພິຈາລະນາຂອງ BSEA ແມ່ນໄດ້ຮັບການຝຶກອົບຮົມດ້ານກົດໝາຍການສຶກສາພິເສດ ແລະ ຕ້ອງບໍ່ມີຄວາມສຳພັນສ່ວນຕົວ ຫຼື ທາງວິຊາຊີບກັບທ່ານ ຫຼື ຄົນອື່ນທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ.

ການພິຈາລະນາຕາມຂະບວນການທາງກົດໝາຍຈະພິຈາລະນາຂໍ້ຂັດແຍ່ງກ່ຽວກັບສິດ; ການປະເມີນຜົນ; IEP; ຄຳຕັດສິນໃນການຊັບຊ້ອນດ້ານການສຶກສາ, ລວມທັງສິ່ງທີ່ເປັນຜົນມາຈາກເລື່ອງລະບຽບວິໄນ; FAPE; ຂໍ້ບັນຍັດການສຶກສາພິເສດ ຫຼື ການຄຸ້ມຄອງຂອງກົດໝາຍຂອງລັດ ແລະ ລັດຖະບານກາງຕໍ່ນັກຮຽນທີ່ມີຄວາມພິການ. ທ່ານຕ້ອງຍື່ນຂໍການພິຈາລະນາພາຍໃນສອງປີນັບແຕ່ມື້ທີ່ທ່ານຮູ້ ຫຼື ຄວນວ່າ[7] ກ່ຽວກັບເຫດການທີ່ເປັນພື້ນຖານສຳລັບຄຳຮ້ອງຮຽນຂອງທ່ານ. ໄລຍະເວລານີ້ແມ່ນສາມາດຂະຫຍາຍໄດ້ ຖ້າ

---

[5] ລາຍລະອຽດກ່ຽວກັບຂະບວນການໄກ່ເກ່ຍແມ່ນມີຢູ່ໃນເວັບໄຊຂອງ DESE ທີ່ http://www.mass.gov/anf/hearings-and- appeals/bureau-of-special-education-appeals-bsea/mediation/.

[6] https://www.mass.gov/info-details/learn-about-mediation-at-the-bsea

[7] ວະລີທີ່ວ່າ "ຫຼື ຄວນຮູ້" ເຕືອນໃຫ້ທ່ານຈື່ວ່າ ທ່ານມີຄວາມຮັບຜິດຊອບໃນການຮັບຮູ້ຫຼັກສູດຂອງນັກຮຽນຂອງທ່ານ.

ທ່ານສາມາດສະແດງໃຫ້ເຫັນວ່າ ໄດ້ມີການຫ້າມບໍ່ໃຫ້ທ່ານຍື່ນຂໍການພິຈາລະນາ ເນື່ອງຈາກທາງໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ນຳສະເໜີຢ່າງບໍ່ຖືກຕ້ອງວ່າ ໜ່ວຍງານດັ່ງກ່າວໄດ້ແກ້ໄຂບັນຫາໃນຄຳຮ້ອງຮຽນຂອງທ່ານແລ້ວ ຫຼື ຖ້າໜ່ວຍງານໄດ້ຫ່ວງດຶງບາງຂໍ້ມູນທີ່ຈຳເປັນຈາກທ່ານ.

ທ່ານ ຫຼື ໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານ ສາມາດຍື່ນຄຳຮ້ອງຂໍການພິຈາລະນາຕາມຂະບວນການທາງກົດໝາຍ[8] ຢ່າງເປັນລາຍລັກອັກສອນກັບອີກຝ່າຍ ແລະ ສົ່ງສຳເນົາໃຫ້ BSEA ເພື່ອທີ່ຈະໄດ້ຮັບການພິຈາລະນາຕາມຂະບວນການທາງກົດໝາຍ. BSEA ໄດ້ສ້າງແບບຟອມຄຳຮ້ອງຂໍການພິຈາລະນາ[9] ທີ່ທ່ານສາມາດນຳໃຊ້ ຫຼື ທ່ານສາມາດຂຽນໜັງສືຂອງທ່ານເອງແທນທີ່ຈະນຳໃຊ້ແບບຟອມ ແຕ່ທ່ານຕ້ອງລະບຸຊື່ຂອງນັກຮຽນຂອງທ່ານ ແລະ ທີ່ຢູ່ພັກອາໄສ (ຫຼື ຂໍ້ມູນການຕິດຕໍ່ ຖ້ານັກຮຽນບໍ່ມີເຮືອນຢູ່); ຊື່ໂຮງຮຽນຂອງນັກຮຽນຂອງທ່ານ; ລາຍລະອຽດກ່ຽວກັບບັນຫາທີ່ທ່ານກັງວົນ, ລວມທັງຂໍ້ມູນທີ່ມີຄວາມສະເພາະກ່ຽວກັບບັນຫາ; ແລະ ການສະເໜີທາງອອກຕໍ່ບັນຫາ. ກະລຸນາຮັບຊາບວ່າ ການພິຈາລະນາຈະຈຳກັດສະເພາະບັນຫາທີ່ລະບຸໃນຄຳຮ້ອງຮຽນ.

ທ່ານຕ້ອງສົ່ງຄຳຮ້ອງຂໍການພິຈາລະນາຕາມຂະບວນການທາງກົດໝາຍໃຫ້ໜ່ວຍງານເຂດຄຸ້ມຄອງໂຮງຮຽນ (ຫຼື ຄູ່ກໍລະນີຂອງຜູ້ຮ້ອງຮຽນ) ແລະ ສຳເນົາໃຫ້ BSEA. ຖ້າຄຳຮ້ອງຮຽນຕາມຂະບວນການທາງກົດໝາຍບໍ່ມີຂໍ້ມູນພຽງພໍ, ຝ່າຍກົງກັນຂ້າມສາມາດໂຕ້ແຍ່ງ *ຄວາມບໍ່ພຽງພໍ* ຂອງຄຳຮ້ອງຮຽນພາຍໃນ 15 ວັນ. BSEA ຈະຕັດສິນວ່າ ຄຳຮ້ອງຮຽນມີຄວາມພຽງພໍພາຍໃນ 5 ວັນຫຼັງມີການໂຕ້ແຍ່ງ. ຂໍ້ມູນເພີ່ມເຕີມແມ່ນສາມາດເພີ່ມໃສ່ຄຳຮ້ອງຮຽນໄດ້ ຖ້າຝ່າຍກົງກັນຂ້າມເຫັນດີ ຫຼື ຖ້າເຈົ້າໜ້າທີ່ພິຈາລະນາອະນຸຍາດໃຫ້ເຮັດເຊັ່ນນັ້ນ. ຢ່າງໃດກໍຕາມ, ຖ້າມີການເພີ່ມບັນຫາເພີ່ມເຕີມໃສ່ຄຳຮ້ອງຮຽນໃນພາຍຫຼັງ, ກຳນົດເວລາຂອງການພິຈາລະນາຈະເລີ່ມຕົ້ນຄືນໃໝ່.

ຖ້າບໍ່ມີການໂຕ້ແຍ່ງເລື່ອງຄວາມພຽງພໍຂອງຄຳຮ້ອງຮຽນ, ຂະບວນການພິຈາລະນາກໍຈະສືບຕໍ່. ຖ້າໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ສົ່ງແຈ້ງການລ່ວງໜ້າທີ່ເປັນລາຍລັກອັກສອນໃຫ້ທ່ານກ່ຽວກັບບັນຫາທີ່ທ່ານກຳລັງຮ້ອງຮຽນ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງສົ່ງໜັງສືແຈ້ງຕອບຕໍ່ຄຳຮ້ອງຮຽນຢ່າງເປັນລາຍລັກອັກສອນໃຫ້ທ່ານພາຍໃນ 10 ວັນຕາມປະຕິທິນ ຫຼັງໄດ້ຮັບຄຳຮ້ອງຂໍການພິຈາລະນາຕາມຂະບວນການທາງກົດໝາຍ.

**ໝາຍເຫດ:** ຖ້າ *ໜ່ວຍງານເຂດຄຸ້ມຄອງໂຮງຮຽນ* ໄດ້ຍື່ນຄຳຮ້ອງຂໍການພິຈາລະນາຕາມຂະບວນການທາງກົດໝາຍ, *ພໍ່ແມ່ຕ້ອງຕອບກັບ* ພາຍໃນ 10 ວັນຕາມປະຕິທິນ ຫຼັງໄດ້ຮັບຄຳຮ້ອງຂໍການພິຈາລະນາ ແລະ ໃຫ້ຕອບບັນຫາທີ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ຍົກຂຶ້ນເປັນການສະເພາະ.

ຫຼັງທ່ານຍື່ນຄຳຮ້ອງຂໍການພິຈາລະນາຕາມຂະບວນການທາງກົດໝາຍ, ໜ່ວຍງານເຂດຄຸ້ມຄອງໂຮງຮຽນມີເວລາ 30 ວັນທີ່ຈະເຮັດ

[8] ຂໍ້ມູນກ່ຽວກັບຄຳຮ້ອງຂໍການພິຈາລະນາຕາມຂະບວນການທາງກົດໝາຍແມ່ນມີຢູ່ໃນ: http://www.mass.gov/anf/hearings-and-appeals/bureau- of-special-education-appeals-bsea/due-process-hearings/.

[9] https://www.mass.gov/doc/hearing-request-form/download

ວຽກກັບທ່ານ ເພື່ອແກ້ໄຂຂໍ້ຂັດແຍ່ງກ່ອນຈະມີການພິຈາລະນາຕາມຂະບວນການທາງກົດໝາຍ.[10]

ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງຈັດກອງປະຊຸມແກ້ໄຂບັນຫາພາຍໃນ 15 ວັນຕາມປະຕິທິນ ຫຼັງໄດ້ຮັບຄຳຮ້ອງຮຽນຕາມຂະບວນການທາງກົດໝາຍ.[11] ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະຕັດສິນກັບທ່ານວ່າ ສະມາຊິກໃດຂອງ IEP ທີ່ຕ້ອງເຂົ້າຮ່ວມກອງປະຊຸມ. ຕົວແທນຈາກໜ່ວຍງານເຂດຄຸ້ມຄອງໂຮງຮຽນ ທີ່ສາມາດຕັດສິນກ່ຽວກັບຫຼັກສູດຂອງນັກຮຽນຂອງທ່ານຕ້ອງເຂົ້າຮ່ວມກອງປະຊຸມ. ທະນາຍຄວາມຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນ *ບໍ່ສາມາດ* ເຂົ້າຮ່ວມ ເວັ້ນແຕ່ວ່າທ່ານຈະມີທະນາຍຄວາມເຂົ້າຮ່ວມກອງປະຊຸມ.

ທ່ານຕ້ອງເຂົ້າຮ່ວມໃນກອງປະຊຸມແກ້ໄຂບັນຫາ ເວັ້ນແຕ່ວ່າທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ເຫັນດີຢ່າງເປັນລາຍລັກອັກສອນ ທີ່ຈະບໍ່ຈັດກອງປະຊຸມ ຫຼື ຖ້າທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕັດສິນທີ່ຈະນຳໃຊ້ຂະບວນການໄກ່ເກ່ຍ. ຖ້າທ່ານປະຕິເສດທີ່ຈະເຂົ້າຮ່ວມໃນກອງປະຊຸມແກ້ໄຂບັນຫາ, ການພິຈາລະນາຈະບໍ່ເດີນໜ້າ.

ຖ້າທ່ານເຕັມໃຈປະຊຸມ ແຕ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນປະຕິເສດ ຫຼື ທ່ວງດຶງກອງປະຊຸມແກ້ໄຂບັນຫາເປັນເວລາຫຼາຍກວ່າ 15 ວັນ ຫຼັງໄດ້ຮັບແຈ້ງການກ່ຽວກັບຄຳຮ້ອງຂໍການພິຈາລະນາຂອງທ່ານ, ທ່ານກໍສາມາດຂໍໃຫ້ເຈົ້າໜ້າທີ່ພິຈາລະນາດຳເນີນຂະບວນການພິຈາລະນາໄດ້. ຖ້າທ່ານປະຊຸມ ແຕ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ໄດ້ແກ້ໄຂຄຳຮ້ອງຮຽນຕາມຂະບວນການທາງກົດໝາຍຕາມຄວາມພໍໃຈຂອງທ່ານພາຍໃນ 30 ວັນ ຫຼັງການຍື່ນຄຳຮ້ອງຮຽນ, ການພິຈາລະນາຕາມຂະບວນການທາງກົດໝາຍກໍສາມາດເດີນໜ້າໄດ້.

ຂະບວນການແກ້ໄຂບັນຫາຈະສິ້ນສຸດເມື່ອໜຶ່ງໃນເຫດການຕໍ່ໄປນີ້ເກີດຂຶ້ນ:

- ເມື່ອທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນເຫັນດີຢ່າງເປັນລາຍລັກອັກສອນ ທີ່ຈະຢຸດຕິໄລຍະແກ້ໄຂບັນຫາ;
- ໄລຍະແກ້ໄຂບັນຫາ 30 ວັນໄດ້ສິ້ນສຸດລົງ;
- ການໄກ່ເກ່ຍໄດ້ສິ້ນສຸດລົງ; ຫຼື
- ເມື່ອທ່ານ ແລະ ເຈົ້າໜ້າທີ່ຂອງໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ລົງນາມເອກະສານ ທີ່ລະບຸຂໍ້ຕົກລົງຂອງທ່ານ ທີ່ໄດ້ແກ້ໄຂຂໍ້ຂັດແຍ່ງຂອງທ່ານ. ສິ່ງນີ້ແມ່ນ "ສັນຍາປະນີປະນອມ" ແລະ ສາມາດບັງຄັບໃຊ້ໂດຍສານຂອງລັດ ຫຼື ລັດຖະບານກາງ. ກະລຸນາຮັບຊາບວ່າ ຖ້າທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ລົງນາມໃນສັນຍາ ເຊິ່ງເປັນຜົນມາຈາກກອງປະຊຸມແກ້ໄຂບັນຫາ, ທ່ານ ຫຼື ໜ່ວຍງານເຂດຄຸ້ມຄອງໂຮງຮຽນແມ່ນສາມາດຍົກເລີກສັນຍາພາຍໃນ 3 ວັນລັດຖະການຫຼັງເວລາທີ່ທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ລົງນາມໃນສັນຍາ.

---

[10] ຖ້າທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນເຫັນດີທີ່ຈະໄກ່ເກ່ຍ, ທ່ານສາມາດເຫັນດີສືບຕໍ່ໄກ່ເກ່ຍຫຼັງໄລຍະເວລາ 30 ວັນ.

[11] ບໍ່ຈຳເປັນຕ້ອງມີວາລະແກ້ໄຂບັນຫາ ຖ້າໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ຮ້ອງຂໍການພິຈາລະນາຕາມຂະບວນການທາງກົດໝາຍ

**6.5 ການນຳສະເໜີຫຼັກຖານຂອງທ່ານຕໍ່ເຈົ້າໜ້າທີ່ພິຈາລະນາທີ່ເປັນກາງໃນລະຫວ່າງການພິຈາລະນາຕາມຂະບວນການທາງກົດໝາຍ**

ເມື່ອທ່ານຍື່ນຄຳຮ້ອງຮຽນຕາມຂະບວນການທາງກົດໝາຍ, BSEA ຈະກຳນົດວັນທີພິຈາລະນາ, ແຕ່ງຕັ້ງເຈົ້າໜ້າທີ່ພິຈາລະນາ ແລະ ສົ່ງຂໍ້ມູນລະອຽດໃຫ້ທ່ານ ກ່ຽວກັບຂະບວນການພິຈາລະນາ ແລະ ລາຍຊື່ທະນາຍຄວາມ ຫຼື ທີ່ປຶກສາທີ່ບໍ່ເກັບຄ່າບໍລິການ ຫຼື ທີ່ມີຄ່າບໍລິການຕໍ່າທີ່ທ່ານສາມາດຕິດຕໍ່ຂໍຄວາມຊ່ວຍເຫຼືອໄດ້.

ໃນລະຫວ່າງການພິຈາລະນາຕາມຂະບວນການທາງກົດໝາຍ, ທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະຕ້ອງນຳສະເໜີຫຼັກຖານ ແລະ ສະໜອງຄຳໃຫ້ການຈາກພະຍານຕໍ່ເຈົ້າໜ້າທີ່ພິຈາລະນາທີ່ເປັນກາງຈາກ BSEA. ໃນການພິຈາລະນາຕາມຂະບວນການທາງກົດໝາຍ, ລວມທັງການພິຈາລະນາທີ່ກ່ຽວຂ້ອງກັບຂະບວນການລະບຽບວິໄນ, ທ່ານສາມາດ:

- ໄປນຳ, ໄດ້ຮັບຄຳແນະນຳຈາກ ແລະ ຕາງໜ້າໂດຍທະນາຍຄວາມ ແລະ/ຫຼື ທີ່ປຶກສາ;
- ໃຫ້ນັກຮຽນຂອງທ່ານໄປທີ່ການພິຈາລະນາ;
- ເປີດການພິຈາລະນາຕໍ່ສາທາລະນະ;
- ນຳສະເໜີຫຼັກຖານເຊັ່ນ: ເອກະສານ ແລະ ບົດລາຍງານ;
- ສະເໜີຂໍ ຫຼື ກຳນົດໂດຍຜ່ານໝາຍສານເພື່ອໃຫ້ມີພະຍານມາທີ່ການພິຈາລະນາ ແລະ ຕອບຄຳຖາມ;
- ເບິ່ງຫຼັກຖານທີ່ຈະຖືກນຳໃຊ້ໃນການພິຈາລະນາຢ່າງໜ້ອຍຫ້າວັນລັດຖະການກ່ອນກຳນົດ ແລະ ຂໍໃຫ້ເຈົ້າໜ້າພິຈາລະນາເກັບຫຼັກຖານທີ່ທ່ານບໍ່ໄດ້ເຫັນອອກ; ແລະ
- ຮັບເອົາບັນທຶກພົ້ນການຄົ້ນຄວ້າຂອງການພິຈາລະນາ ທີ່ກ່ຽວກັບຂໍ້ເທັດຈິງ ແລະ ຄຳຕັດສິນໃນຮູບແບບລາຍລັກອັກສອນ ຫຼື ອີເລັກໂທຣນິກຕາມທີ່ທ່ານຕ້ອງການ ໂດຍທີ່ທ່ານບໍ່ຕ້ອງອອກຄ່າໃຊ້ຈ່າຍຫຍັງ. ເພື່ອທີ່ຈະຮັບເອົາບັນທຶກການພິຈາລະນາຢ່າງເປັນລາຍລັກອັກສອນ, ທ່ານຕ້ອງເຮັດການສະເໜີຢ່າງເປັນລາຍລັກອັກສອນ.

ຂໍ້ມູນເພີ່ມເຕີມກ່ຽວກັບການພິຈາລະນາຕາມຂະບວນການທາງກົດໝາຍແມ່ນສາມາດເອົາຈາກ BSEA ໄດ້ທີ່ 781-397- 4750 ແລະ ຈາກເວັບໄຊຂອງ BSEA ທີ່: http://www.mass.gov/dala/bsea.

ການພິຈາລະນາແມ່ນດຳເນີນຕາມກົດໝາຍວ່າດ້ວຍຂະບວນການທາງພາກບໍລິຫານຂອງ Massachusetts[12] ແລະ ກົດລະບຽບຂອງການພິຈາລະນາ ຂອງ BSEA.[13] ເຈົ້າໜ້າທີ່ພິຈາລະນາຕ້ອງອອກຄຳຕັດສິນທີ່ເດັດຂາດພາຍໃນ 45 ວັນ ຫຼັງໄລຍະແກ້ໄຂບັນຫາຕາມທີ່ອະທິບາຍຂ້າງເທິງ ເວັ້ນແຕ່ວ່າເຈົ້າໜ້າທີ່ພິຈາລະນາໄດ້ອະນຸຍາດໃຫ້ມີການຂະຫຍາຍເວລາຕາມຄຳຮ້ອງຂໍຂອງຝ່າຍໃດໜຶ່ງ. ເຈົ້າໜ້າທີ່ພິຈາລະນາຈະສົ່ງສຳເນົາຄຳຕັດສິນໃຫ້ທ່ານ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນ. ທັງພໍ່ແມ່ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງປະຕິບັດຕາມຄຳຕັດສິນຂອງເຈົ້າໜ້າທີ່ພິຈາລະນາ.

ຄຳຕັດສິນຂອງເຈົ້າໜ້າທີ່ພິຈາລະນາທີ່ຈະກຳນົດວ່າ ນັກຮຽນຂອງທ່ານຈະໄດ້ຮັບການສະເໜີ FAPE ຫຼື ບໍ່ນັ້ນ ແມ່ນຕ້ອງໄດ້ອີງຕາມພື້ນ

[12] M.G.L. c.30A

[13] https://www.mass.gov/doc/hearing-rules/download

ການຄົ້ນຄວ້າວ່າ ໄດ້ມີການລະເມີດສິດທາງການສຶກສາພິເສດຂອງນັກຮຽນຂອງທ່ານ ຫຼື ການຕັດສິນວ່າໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ສາມາດປະຕິບັດພັນທະອື່ນໆຂອງເຂົາເຈົ້າທີ່ມີຕໍ່ນັກຮຽນຂອງທ່ານພາຍໃຕ້ກົດໝາຍ ແລະ ລະບຽບການສຶກສາພິເສດ. ຫາກທ່ານໄດ້ຮ້ອງຮຽນກ່ຽວກັບການລະເມີດຂະບວນການສຶກສາພິເສດ (ເຊັ່ນ: ການບໍ່ສາມາດຈັດກອງປະຊຸມທີມງານຢ່າງຖືກຕ້ອງ, ການເກັບບັນທຶກທີ່ບໍ່ດີ ຫຼື ການບໍ່ສາມາປະຕິບັດຕາມກຳນົດເວລາ), ເຈົ້າໜ້າທີ່ພິຈາລະນາສາມາດພົບວ່າ ນັກຮຽນຂອງທ່ານບໍ່ໄດ້ຮັບ FAPE ຖ້າຫາກວ່າການທີ່ບໍ່ສາມາດປະຕິບັດຕາມຂະບວນການ:

- ໄດ້ແຊກແຊງກັບສິດຂອງນັກຮຽນຂອງທ່ານຕໍ່ FAPE;
- ໄດ້ແຊກແຊງກັບຄວາມສາມາດຂອງທ່ານຫຼາຍ ໃນການມີສ່ວນກ່ຽວຂ້ອງກັບຄຳຕັດສິນກ່ຽວກັບການສຶກສາຂອງນັກຮຽນຂອງທ່ານ; ຫຼື
- ໄດ້ຖອດຖອນຜົນປະໂຫຍດທາງການສຶກສາຈາກນັກຮຽນຂອງທ່ານ.

ຄຳຕັດສິນຂອງເຈົ້າໜ້າທີ່ພິຈາລະນາແມ່ນຄຳຕັດສິນຂອງໜ່ວຍງານທີ່ເດັດຂາດ ແລະ ບໍ່ສາມາດນຳໄປພິຈາລະນາຄືນໃໝ່ໄດ້ໂດຍ BSEA ຫຼື ປ່ຽນແປງໂດຍ DESE. ຄຳຕັດສິນຂອງການພິຈາລະນາແມ່ນເປັນສາທາລະນະ[14] ແລະ ສາມາດເບິ່ງໄດ້ທີ່ເວັບໄຊຂອງ BSEA ທີ່ https://www.mass.gov/bsea-decisions-and-rulings.

### 6.6 ການອຸທອນຄຳຕັດສິນຂອງການພິຈາລະນາຕໍ່ສານຂອງລັດ ຫຼື ລັດຖະບານກາງ

ຖ້າພໍ່ແມ່ ຫຼື ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ເຫັນດີກັບຄຳຕັດສິນຂອງເຈົ້າໜ້າທີ່ພິຈາລະນາ, ເຂົາເຈົ້າສາມາດສະເໜີໃຫ້ມີການກວດສອບຄຳຕັດສິນນັ້ນຢູ່ສານຂອງລັດ ຫຼື ລັດຖະບານກາງ. ຕ້ອງມີການຍື່ນຄຳຮ້ອງຂໍກວດສອບດັ່ງກ່າວພາຍໃນ 90 ວັນ ຫຼັງມີການອອກຄຳຕັດສິນ.

### 6.7 ຄ່າທະນາຍຄວາມ — 34 CFR §300.517

ແຕ່ລະຝ່າຍແມ່ນມີຄວາມຮັບຜິດຊອບໃນການຈ່າຍຄ່າທະນາຍຄວາມຂອງຕົວເອງ ເວັ້ນແຕ່ວ່າສານຈະຕັດສິນເປັນຢ່າງອື່ນ. ຖ້າທ່ານໄດ້ຮັບຜົນທີ່ເປັນໃຈໃນຄຳຕັດສິນຂອງການພິຈາລະນາ ຫຼື ການດຳເນີນການໂດຍສານຢ່າງເປັນລາຍລັກອັກສອນ, ສານ[15] ສາມາດຕັດສິນວ່າ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຄວນຈ່າຍຄ່າທະນາຍຄວາມທີ່ສົມເຫດສົມຜົນໃຫ້ທ່ານ. ຢ່າງໃດກໍຕາມ, ກະລຸນາຮັບຊາບວ່າ ທ່ານຈະບໍ່ສາມາດຮັບຄ່າທຳນຽມເຫຼົ່ານີ້ ສຳລັບເວລາທີ່ໃຊ້ໃນການຮ້ອງຟ້ອງໃນຄະດີຄວາມຂອງທ່ານພາຍຫຼັງທາງໜ່ວຍງານໄດ້ສະເໜີປະນີປະນອມ ຖ້າຫາກວ່າ

- ໜ່ວຍງານໄດ້ສະເໜີປະນີປະນອມຢ່າງເປັນລາຍລັກອັກສອນພາຍໃນ 10 ມື້ ຫຼື ຫຼາຍກວ່ານັ້ນ ກ່ອນຈະມີການພິຈາລະນາ,
- ທ່ານບໍ່ໄດ້ຍອມຮັບເອົາຂໍ້ສະເໜີພາຍໃນ 10 ວັນ ແລະ
- ຜົນຂອງການພິຈາລະນາບໍ່ໄດ້ດີກວ່າຂໍ້ສະເໜີປະນີປະນອມ.

[14] ຄຳຕັດສິນຂອງການພິຈາລະນາຈະຖືກເຜີຍແຜ່ຫຼັງຈາກຖອດຂໍ້ມູນທີ່ຈະເຮັດໃຫ້ສາມາດລະບຸຕົວຕົນຂອງນັກຮຽນອອກ.

[15] ເຈົ້າໜ້າທີ່ພິຈາລະນາຂອງ BSEA ບໍ່ສາມາດຕັດສິນເລື່ອງຄ່າທະນາຍຄວາມ.

ຖ້າໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ຮັບຄຳຕັດສິນທີ່ເປັນໃຈ, ສານສາມາດສັ່ງໃຫ້ທະນາຍຄວາມຂອງທ່ານ ຈ່າຍຄ່າດຳເນີນການທາງກົດໝາຍໃຫ້ແກ່ໜ່ວຍງານເຂດຄຸ້ມຄອງໂຮງຮຽນ ຖ້າສານພົບວ່າ ທະນາຍຄວາມຂອງທ່ານໄດ້ຍື່ນຄຳຮ້ອງຮຽນ ຫຼື ສືບຕໍ່ຮ້ອງຟ້ອງ ພາຍຫຼັງທີ່ຮັບຮູ້ວ່າ ຄຳຮ້ອງຮຽນບໍ່ມີພື້ນຖານທາງຂໍ້ເທັດຈິງ, ບໍ່ສົມເຫດສົມຜົນ, ບໍ່ຈິງຈັງ ຫຼື ມີການດຳເນີນການເພື່ອຈຸດປະສົງທີ່ບໍ່ເໝາະສົມ. ນອກຈາກນັ້ນ, ສານຍັງສາມາດສັ່ງໃຫ້ທ່ານ ຫຼື ທະນາຍຄວາມຂອງທ່ານຈ່າຍຄ່າດຳເນີນການທາງກົດໝາຍ ຖ້າຫາກວ່າໄດ້ມີການນຳສະເໜີວ່າ ຄຳຮ້ອງຂໍຂອງທ່ານສຳລັບການພິຈາລະນາຂະບວນການທາງກົດໝາຍ ຫຼື ສາເຫດຂອງການດຳເນີນການພາຍຫຼັງ ແມ່ນເພື່ອຈຸດປະສົງທີ່ບໍ່ເໝາະສົມ, ເຊັ່ນ: ເພື່ອຂົ່ມຂູ່, ເພື່ອທ່ວງດຶງໂດຍບໍ່ຈຳເປັນ ຫຼື ເພື່ອເພີ່ມຄ່າໃຊ້ຈ່າຍໃນການຮ້ອງຟ້ອງໂດຍບໍ່ຈຳເປັນ.

**7. ຄວາມຮັບຜິດຊອບຂອງທ່ານແມ່ນຫຍັງ ຖ້າຫາກວ່າທ່ານໄດ້ຊັບຊ້ອນນັກຮຽນຂອງທ່ານເຂົ້າໃນໂຮງຮຽນ ເອກະຊົນ ແລະ ທ່ານຄິດວ່າໜ່ວຍງານເຂດຄຸ້ມຄອງໂຮງຮຽນຂອງທ່ານຄວນເບີກຄ່າຮຽນໃຫ້ທ່ານຄືນ?**

**34 CFR §300.148**

ມີບາງກໍລະນີທີ່ພໍ່ແມ່ຄິດວ່າ ໂຮງຮຽນລັດບໍ່ໄດ້ສະໜອງ FAPE ໃຫ້ແກ່ນັກຮຽນ ແລະ ພໍ່ແມ່ໄດ້ຕັດສິນໃຈຊັບຊ້ອນນັກຮຽນເຂົ້າໃນໂຮງຮຽນເອກະຊົນ. ພໍ່ແມ່ສາມາດລົງທະບຽນນັກຮຽນຂອງຕົນເຂົ້າໃນໂຮງຮຽນເອກະຊົນ ໂດຍອອກຄ່າໃຊ້ຈ່າຍເອງໄດ້ທຸກເວລາ. ຢ່າງໃດກໍຕາມ, ຖ້າພໍ່ແມ່ຄິດວ່າ ໂຮງຮຽນລັດຄວນຮັບຜິດຊອບຄ່າໃຊ້ຈ່າຍສຳລັບການສຶກສາຂອງນັກຮຽນຢູ່ທີ່ໂຮງຮຽນເອກະຊົນ, ພໍ່ແມ່ຕ້ອງແຈ້ງໜ່ວຍງານເຂດຄຸ້ມຄອງໂຮງຮຽນກ່ຽວກັບຄຳຄັດຄ້ານຕໍ່ IEP ແລະ ຫຼັກສູດຂອງນັກຮຽນ, ປະຕິເສດ IEP, ແຈ້ງໜ່ວຍງານເຂດຄຸ້ມຄອງໂຮງຮຽນກ່ຽວກັບຈຸດປະສົງຂອງຕົນທີ່ຈະຖອດນັກຮຽນອອກ ແລະ ລົງທະບຽນນັກຮຽນເຂົ້າໃນໂຮງຮຽນເອກະຊົນ ແລະ ສະເໜີຂໍການພິຈາລະນາຈາກ BSEA. ພໍ່ແມ່ຕ້ອງແຈ້ງໜ່ວຍງານເຂດຄຸ້ມຄອງໂຮງຮຽນ ກ່ອນຖອດນັກຮຽນອອກຈາກໂຮງຮຽນລັດ ໂດຍແຈ້ງທາງວາຈາໃນກອງປະຊຸມທີມງານກ່ອນການຖອດ ຫຼື ຢ່າງເປັນລາຍລັກອັກສອນຢ່າງໜ້ອຍ 10 ວັນລັດຖະການ ກ່ອນຖອດນັກຮຽນອອກຈາກໂຮງຮຽນ.

ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ຈຳເປັນຕ້ອງຈ່າຍຄ່າຮຽນຢູ່ໂຮງຮຽນເອກະຊົນໃຫ້ນັກຮຽນ ຖ້າໜ່ວຍງານເຂດຄຸ້ມຄອງໂຮງຮຽນມີ FAPE ໃຫ້ນັກຮຽນຢູ່ແລ້ວ. ການທີ່ບໍ່ສາມາດຕົກລົງກັນໄດ້ລະຫວ່າງພໍ່ແມ່ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນກ່ຽວກັບກໍລະນີທີ່ວ່າ ຫຼັກສູດຂອງນັກຮຽນມີ FAPE ຫຼື ບໍ່ ແລະ ການທີ່ໄດ້ສະເໜີຂໍເບີກເງິນຄືນສຳລັບຫຼັກສູດຂອງພາກເອກະຊົນ ແມ່ນສາມາດແກ້ໄຂໄດ້ໂດຍຜ່ານຂະບວນການທາງກົດໝາຍ ທີ່ໄດ້ກ່າວມາກ່ອນໜ້ານີ້ໃນເອກະສານສະບັບນີ້. ເຈົ້າໜ້າທີ່ພິຈາລະນາຈະຕັດສິນວ່າ ໜ່ວຍງານເຂດຄຸ້ມຄອງໂຮງຮຽນໄດ້ສະໜອງ FAPE ໃຫ້ນັກຮຽນຂອງທ່ານ ຫຼື ບໍ່. ຖ້າເຈົ້າໜ້າທີ່ພິຈາລະນາພົບວ່າ ໜ່ວຍງານເຂດຄຸ້ມຄອງໂຮງຮຽນບໍ່ໄດ້ສະໜອງ FAPE ໃຫ້ນັກຮຽນຂອງທ່ານ, ທ່ານໄດ້ປະຕິບັດຕາມຂັ້ນຕອນຂ້າງເທິງ ແລະ ການຊັບຊ້ອນເຂົ້າໂຮງຮຽນເອກະຊົນແມ່ນເໝາະສົມ, ພາຍຫຼັງພິຈາລະນາທຸກສະຖານະການ ທີ່ກ່ຽວກັບການຖອດນັກຮຽນອອກ ເຈົ້າໜ້າທີ່ພິຈາລະນາສາມາດຕັດສິນໃຫ້ໜ່ວຍງານເຂດຄຸ້ມຄອງໂຮງຮຽນເບີກເງິນຄືນໃຫ້ທ່ານສຳລັບຄ່າໃຊ້ຈ່າຍທັງໝົດ ຫຼື ບາງສ່ວນທີ່ກ່ຽວກັບການຊັບຊ້ອນເຂົ້າໂຮງຮຽນເອກະຊົນ.

**8. ຕ້ອງເຮັດຫຍັງແດ່ ເພື່ອວາງແຜນກ່ຽວກັບການປ່ຽນຈາກໂຮງຮຽນມັດທະຍົມຂອງນັກຮຽນຂອງທ່ານ? 34 CFR §300.43**

ການວາງແຜນໃຫ້ນັກຮຽນຂອງທ່ານ ເພື່ອທີ່ຈະປ່ຽນຈາກໂຮງຮຽນໄປຫາໂອກາດຕ່າງໆ ຫຼັງຮຽນຈົບຈະອຳນວຍຕໍ່ຄວາມສະດວກຂອງນັກຮຽນຂອງທ່ານ ໃນການເຂົ້າຮ່ວມກິດຈະກຳຕ່າງໆຢ່າງສຳເລັດເຊັ່ນ: ການສຶກສາຫຼັງມັດທະຍົມສຶກສາ, ການເຮັດວຽກ, ຊຸມຊົນ ແລະ ຊີວິດຜູ້ໃຫຍ່. ການວາງແຜນສຳລັບການປ່ຽນແປງຕ້ອງອີງຕາມຈຸດແຂງ, ຄວາມມັກ, ຄວາມສົນໃຈ ແລະ ຄວາມຕ້ອງການຂອງນັກຮຽນຂອງທ່ານ, ຕ້ອງເລີ່ມຕົ້ນເມື່ອນັກຮຽນຂອງທ່ານມີອາຍຸ 14 ປີ ແລະ ຕ້ອງໄດ້ປຶກສາຫາລືກັນທຸກປີຢູ່ທີ່ກອງປະຊຸມທີມງານ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນ

ຕ້ອງປຶກສາກ່ຽວກັບຄວາມຕ້ອງການໃນການປ່ຽນແປງຂອງນັກຮຽນກັບທ່ານ ແລະ ນັກຮຽນຂອງທ່ານ ແລະ ຕ້ອງພິຈາລະນາເປົ້າໝາຍຂອງນັກຮຽນຂອງທ່ານຫຼັງຜູ້ກ່ຽວຮຽນຈົບໂດຍທີ່ມີໃບປະກາດສະນີຍະບັດຊັ້ນມັດທະຍົມແບບປົກກະຕິ ຫຼື ເມື່ອຮອດອາຍຸ 22 ປີ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງໃຊ້ແບບຟອມການວາງແຜນສໍາລັບການປ່ຽນແປງ[16] ເພື່ອບັນທຶກຜົນຂອງການປຶກສາຫາລືປະຈໍາປີນີ້. IEP ຂອງນັກຮຽນຕ້ອງປະກອບມີເປົ້າໝາຍການປ່ຽນແປງຫຼັງຊັ້ນມັດທະຍົມ, ວັດຖຸປະສົງ ແລະ ການບໍລິການໂດຍອີງຕາມການປະເມີນຄວາມພິການ ແລະຄວາມຕ້ອງການໃນການປ່ຽນແປງທີ່ເໝາະສົມຂອງຜູ້ກ່ຽວ. ການຮຽນຈົບໂດຍທີ່ມີປະກາດສະນີຍະບັດຊັ້ນມັດທະຍົມແບບປົກກະຕິ ແມ່ນການປ່ຽນແປງການຊັບຊ້ອນ ແລະ ການສິ້ນສຸດການມີສິດຮັບການສຶກສາພິເສດຂອງນັກຮຽນ. ໜ່ວຍງານເຂດຄຸ້ມຄອງໂຮງຮຽນຕ້ອງແຈ້ງທ່ານ ຖ້າຫາກວ່າ ແລະ ເມື່ອຜູ້ຊ່ຽວຊານຂອງໜ່ວຍງານຄາດວ່າ ນັກຮຽນຂອງທ່ານຈະຮຽນຈົບໂດຍມີປະກາດສະນີຍະບັດຊັ້ນມັດທະຍົມແບບປົກກະຕິ. ການປຶກສາຫາລືນີ້ຄວນດໍາເນີນໃນກອງປະຊຸມທີມງານ ໂດຍຈັດລ່ວງຢ່າງໜ້ອຍ 1 ປີກ່ອນນັກຮຽນຈະຮຽນຈົບ.[17]

## 9. ໂຮງຮຽນສາມາດປະຕິບັດວິໄນກັບນັກຮຽນທີ່ມີຄວາມພິການໄດ້ແນວໃດ? 34 CFR §300.530

ໂຮງຮຽນລັດຕ້ອງມີຂະບວນການ ແລະ ມາດຕະຖານ ເພື່ອຮັບປະກັນສະພາບແວດລ້ອມການຮຽນຮູ້ທີ່ປອດໄພສໍາລັບນັກຮຽນ. ໂຮງຮຽນ ແລະໂຮງຮຽນມັດທະຍົມຕ້ອງເຜີຍແຜ່ກົດລະບຽບສໍາລັບການປະພຶດຂອງຕົນ ເພື່ອທີ່ຈະຮຽນຈະຮູ້ວ່າ ເຂົາເຈົ້າຄວນປະພຶດຕົນແນວໃດ. ຖ້ານັກຮຽນປະພຶດຕົນບໍ່ດີ ແລະ ລະເມີດກົດລະບຽບຂອງໂຮງຮຽນ, ໂຮງຮຽນສາມາດປະຕິບັດວິໄນກັບນັກຮຽນໄດ້. ການປະຕິບັດວິໄນຕ້ອງຍຸດຕິທໍາ ແລະບໍ່ລໍາອຽງ.

ໂດຍທົ່ວໄປແລ້ວ, ນັກຮຽນອາດຖືກສັ່ງພັກຮຽນ ຫຼື ຖອດອອກຈາກໂຮງຮຽນເນື່ອງຈາກເຫດຜົນດ້ານລະບຽບວິໄນເປັນເວລາສັ້ນໆ ເຊິ່ງບໍ່ກາຍ 10 ວັນ. ກ່ອນຈະມີການຖອດອອກ ຫຼື ການສັ່ງພັກຮຽນ, ນັກຮຽນຕ້ອງໄດ້ຮັບແຈ້ງວ່າຜູ້ກ່ຽວຖືກກ່າວຫາວ່າໄດ້ເຮັດຫຍັງ ແລະ ຕ້ອງໄດ້ຮັບໂອກາດໃຫ້ບອກເລື່ອງໃນສ່ວນຂອງຜູ້ກ່ຽວ. ໃນລະຫວ່າງການຖອດອອກຈາກໂຮງຮຽນເນື່ອງຈາກເລື່ອງວິໄນໃນໄລຍະສັ້ນ, ໂຮງຮຽນແມ່ນບໍ່ຈໍາເປັນຕ້ອງໃຫ້ຄໍາແນະນໍາແກ່ນັກຮຽນທີ່ມີຄວາມພິການ ເວັ້ນແຕ່ວ່າ ໂຮງຮຽນຈະເຮັດແບບນັ້ນກັບນັກຮຽນທີ່ບໍ່ໄດ້ພິການ. ເມື່ອນັກຮຽນທີ່ມີຄວາມພິການໄດ້ຖືກຖອດອອກຈາກໂຮງຮຽນເປັນເວລາ 10 ວັນຕິດຕໍ່ກັນໃນປີການຮຽນ, ນັກຮຽນຕ້ອງໄດ້ຮັບການບໍລິການສຶກສາ ທີ່ຈະເຮັດໃຫ້ນັກຮຽນສາມາດສືບຕໍ່ເຂົ້າຮ່ວມໃນຫຼັກສູດການສຶກສາທົ່ວໄປ ແລະ ເພື່ອເດີນໜ້າໄປຫາເປົ້າໝາຍທີ່ກໍານົດໄວ້ໃນ IEP ຂອງຜູ້ກ່ຽວ. ເຈົ້າໜ້າທີ່ໂຮງຮຽນຕ້ອງປຶກສາກັບຄູຂອງນັກຮຽນຢ່າງໜ້ອຍໜຶ່ງຄົນ ເພື່ອກໍານົດວ່າການບໍລິການໃດທີ່ມີຄວາມຈໍາເປັນ. ການບໍລິການເຫຼົ່ານີ້ຕ້ອງເລີ່ມໃນມື້ທີ 11 ຂອງການເຂົ້າຮຽນ ຫຼັງມີການຖອດນັກຮຽນອອກເນື່ອງຈາກການປະຕິບັດວິໄນໃນລະຫວ່າງປີການຮຽນ ແລະ ສືບຕໍ່ໃນລະຫວ່າງການຖອດອອກເນື່ອງຈາກການປະຕິບັດວິໄນ.

ໂຮງຮຽນຕ້ອງປະຕິບັດຕາມກົດລະບຽບດ້ານວິໄຍພິເສດສໍາລັບນັກຮຽນທີ່ມີຄວາມພິການ ທີ່ຖືກພົບວ່າມີສິດຮັບການສຶກສາພິເສດ.[18] ແຜນຜັງທີ່

---

[16] ນັກຮຽນຄວນໄດ້ຮັບເຊີນໃຫ້ເຂົ້າຮ່ວມກອງປະຊຸມທີມງານ ເພື່ອປຶກສາກ່ຽວກັບເປົ້າໝາຍ ແລະ ການປ່ຽນແປງຫຼັງຊັ້ນມັດທະຍົມ.

[17] https://www.doe.mass.edu/specialeducation/iep/28mr/default.html

[18] ກົດລະບຽບທາງວິໄນພິເສດຍັງມີຜົນນໍາໃຊ້ກັບນັກຮຽນບາງຄົນ ທີ່ຍັງບໍ່ຖືກພົບວ່າມີສິດຮັບການສຶກສາພິເສດ. ກ່ອນການດໍາເນີນການທີ່ກ່ຽວຂ້ອງ, ຖ້າຫາກວ່າພໍ່ແມ່ໄດ້ສະແດງຢ່າງເປັນລາຍລັກອັກສອນເຖິງຄວາມກັງວົນຂອງຜູ້ກ່ຽວວ່າ ນັກຮຽນອາດມີຄວາມເປັນພິການ ໃຫ້ແກ່ຫົວໜ້າສາຍງານ ຫຼື ບຸກຄະລາກອນບໍລິຫານ ຫຼື ຄູຂອງນັກຮຽນ; ຖ້າຄູ ຫຼື ພະນັກງານຄົນອື່ນໄດ້ສະແດງຄວາມກັງວົນກ່ຽວກັບຮູບແບບການປະພຶດຂອງນັກຮຽນໂດຍກົງກັບຜູ້ອໍານວຍການສຶກສາພິເສດ ຫຼື ບຸກຄະລາກອນຊີ້ນໍາອື່ນໆ ຫຼື ຖ້ານັກຮຽນຖືກແນະນໍາໃຫ້ເຮັດການປະເມີນຜົນທີ່ຍັງບໍ່ທັນສໍາເລັດ, ກົດລະບຽບເຫຼົ່ານີ້ກໍຈະມີຜົນນໍາໃຊ້. ກົດລະບຽບທາງວິໄນສໍາລັບການສຶກສາພິເສດບໍ່ມີຜົນນໍາໃຊ້ ຖ້າພໍ່ແມ່

ສະແດງເຖິງການດຳເນີນກົດລະບຽບທາງວິໄນເຫຼົ່ານີ້ແມ່ນສາມາດເບິ່ງໄດ້ໃນເວັບໄຊຂອງ DESE.[19] ກົດລະບຽບທາງວິໄນພິເສດເຫຼົ່ານີ້ມີຜົນນຳໃຊ້ທັນທີເມື່ອນັກຮຽນຖືກຖອດອອກຈາກການສຶກປະຈຸບັນຂອງຕົນເປັນເວລາ 10 ວັນຕິດຕໍ່ກັນ ຫຼື ຖ້ານັກຮຽນຖືກຖອດອອກ ເນື່ອງຈາກເຫດຜົນທາງວິໄນເປັນເວລາລວມຫຼາຍກວ່າ 10 ວັນໃນປີການຮຽນ ແລະ ມີຮູບແບບການຖອດອອກຈາກການຮຽນສຳລັບພຶດຕິກຳທີ່ຄ້າຍຄືກັນ. ໂຮງຮຽນຕ້ອງແຈ້ງທ່ານທັນທີທີ່ມີການຕັດສິນຖອດນັກຮຽນຂອງທ່ານອອກຈາກການສຶກສາຂອງຜູ້ກ່ຽວເປັນເວລາຫຼາຍກວ່າ 10 ວັນ ແລະ ສະໜອງສຳເນົາຂອງແຈ້ງການສະບັບນີ້.[20]

ທີມງານ IEP ຂອງນັກຮຽນຕ້ອງປະຊຸມກັນພາຍໃນ 10 ວັນ ຫຼັງມີຄຳຕັດສິນຈາກໂຮງຮຽນທີ່ຈະປະຕິບັດວິໄນ. ຢູ່ທີ່ກອງປະຊຸມນີ້ ເຊິ່ງເອີ້ນວ່າ "*ການຕັດສິນແບບຊຸມນຸມ*", ທ່ານ ແລະ ສະມາຊິກຄົນອື່ນໆໃນທີມງານ IEP ຈະຕັດສິນວ່າ ພຶດຕິກຳແມ່ນມາຈາກ ຫຼື ມີຄວາມສຳພັນໂດຍກົງກັບຄວາມພິການຂອງນັກຮຽນ ຫຼື ແມ່ນຜົນໄດ້ຮັບໂດຍກົງຈາກການທີ່ໂຮງຮຽນບໍ່ສາມາດສະໜອງການບໍລິການທີ່ກຳນົດໂດຍ IEP ຂອງນັກຮຽນ ຫຼື ບໍ່. ໃນການຕັດສິນແບບຊຸມນຸມ, ທ່ານ ແລະ ສະມາຊິກຄົນອື່ນໆຂອງທີມງານ IEP ຕ້ອງພິຈາລະນາຂໍ້ມູນທີ່ກ່ຽວຂ້ອງຈາກແຟ້ມຂໍ້ມູນຂອງນັກຮຽນຂອງທ່ານ, ລວມທັງ IEP ຂອງນັກຮຽນຂອງທ່ານ, ການສັງເກດເບິ່ງພຶດຕິກຳຂອງນັກຮຽນໂດຍທ່ານ ແລະ ຄູ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງທີ່ທ່ານສະໜອງໃຫ້.

ຖ້າທີມງານຕັດສິນວ່າ ພຶດຕິກຳຂອງນັກຮຽນແມ່ນເກີດຈາກ ຫຼື ກ່ຽວຂ້ອງໂດຍກົງກັບຄວາມພິການຂອງນັກຮຽນ ຫຼື ການທີ່ບໍ່ສາມາດປະຕິບັດ IEP ຢ່າງເໝາະສົມ, ນັກຮຽນທີ່ມີຄວາມພິການແມ່ນສາມາດຮັບການລົງວິໄນໃນລັກສະນະດຽວກັນ ແລະ ໃນໄລຍະເວລາດຽວກັນກັບນັກຮຽນຄົນອື່ນໆທີ່ໄດ້ຮັບການລົງວິໄນສຳລັບການກະທຳຜິດດຽວກັນ. ຢ່າງໃດກໍຕາມ, ທີມງານ IEP ຕ້ອງກຳນົດສະຖານທີ່ທາງການສຶກສາທີ່ເປັນທາງເລືອກແບບຊົ່ວຄາວ (interim alternative educational setting, IAES) ທີ່ຈະຮັບຊ້ອນນັກຮຽນ ແລະ ການບໍລິການທາງການສຶກສາທີ່ຈະສະໜອງໃຫ້. IAES ແມ່ນສະຖານທີ່ທີ່ບໍ່ແມ່ນບ່ອນຮັບຊ້ອນປະຈຸບັນຂອງນັກຮຽນ ທີ່ເຮັດໃຫ້ນັກຮຽນສາມາດສືບຕໍ່ຮັບການບໍລິການສຶກສາຕາມ IEP ຂອງຜູ້ກ່ຽວ. ບຸກຄະລາກອນຂອງໂຮງຮຽນອາດພິຈາລະນາສະຖານະການແບບສະເພາະຂອງນັກຮຽນ ໃນການຕັດສິນວ່າການປ່ຽນບ່ອນຮັບຊ້ອນແມ່ນມີຄວາມເໝາະສົມໃຫ້ນັກຮຽນທີ່ມີຄວາມພິການ.

ຖ້າທີມງານຕັດສິນວ່າ ພຶດຕິກຳຂອງນັກຮຽນແມ່ນເກີດຈາກ ຫຼື ກ່ຽວຂ້ອງໂດຍກົງກັບຄວາມພິການຂອງນັກຮຽນ ຫຼື ການທີ່ບໍ່ສາມາດປະຕິບັດ IEP ຢ່າງເໝາະສົມ, ນັກຮຽນຕ້ອງຖືກສົ່ງກັບຄືນໄປບ່ອນຮັບຊ້ອນ IEP ທີ່ໄດ້ຮັບອະນຸມັດຫຼ້າສຸດ ເວັ້ນແຕ່ວ່າທ່ານ ແລະ ທີມງານ IEP ຈະຕັດສິນໃຫ້ໄປບ່ອນຮັບຊ້ອນອື່ນ. ນອກຈາກນັ້ນ, ນັກຮຽນຕ້ອງໄດ້ຮັບການປະເມີນພຶດຕິກຳດ້ານໜ້າທີ່ການ. ການປະເມີນພຶດຕິກຳດ້ານໜ້າທີ່ການ (functional behavioral assessment, FBA) ແມ່ນການປະເມີນພຶດຕິກຳແບບຮອບດ້ານ ທີ່ສະໜອງຂໍ້ມູນກ່ຽວກັບພຶດຕິກຳຂອງນັກຮຽນໃຫ້ແກ່ທີມງານ IEP ແລະ ກຳນົດການບໍລິການແຊກແຊງທາງພຶດຕິກຳຂອງນັກຮຽນ ແລະ ການແກ້ໄຂຫຼັກສູດ ທີ່ຖືກສ້າງມາເພື່ອແກ້ໄຂການລະເມີດທາງພຶດຕິກຳ ເພື່ອທີ່ຈະບໍ່ໃຫ້ເກີດຂຶ້ນຊ້ຳ. ຖ້ານັກຮຽນໄດ້ຮັບການປະເມີນພຶດຕິກຳດ້ານໜ້າທີ່ການ ແລະ ມີແຜນການແຊກແຊງທາງພຶດຕິກຳ, ທີມງານ IEP ຄວນຕັດສິນວ່າ ຄວນມີການປ່ຽນແປງຕໍ່ແຜນການແຊກແຊງທາງພຶດຕິກຳບໍ່. ຖ້າພຶດຕິກຳເກີດຈາກການທີ່ບໍ່

ປະຕິເສດທີ່ຈະຍິນຍອມໃຫ້ມີການປະເມີນຜົນ, ຖ້ານັກຮຽນໄດ້ຖືກພົບວ່າບໍ່ມີສິດຮັບການສຶກສາພິເສດ ຫຼື ຖ້າພໍ່ແມ່ໄດ້ຖອດຖອນການຍິນຍອມຕໍ່ການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ.

[19] https://www.doe.mass.edu/specialeducation/policy/dese/advisories/default.html

[20] ການຮັບຊ້ອນແມ່ນກຳນົດໂດຍທີມງານ IEP ແລະ ແມ່ນສະຖານທີ່ທີ່ຈະມີການສະໜອງການບໍລິການ IEP.

ສາມາດປະຕິບັດ IEP ຢ່າງເໝາະສົມ, ໂຮງຮຽນຕ້ອງດໍາເນີນບາດກ້າວໃນການແກ້ໄຂຂໍ້ບົກພ່ອງ.

ກະລຸນາຮັບຊາບວ່າ ຖ້ານັກຮຽນຄອບຄອງ ຫຼື ນໍາໃຊ້ອາວຸດ ຫຼື ຢາເສບຕິດ ຫຼື ໄດ້ເຮັດໃຫ້ມີການບາດເຈັບຕໍ່ຮ່າງກາຍແກ່ບຸກຄົນອື່ນໃນເຂດໂຮງຮຽນ ຫຼື ຢູ່ງານຂອງໂຮງຮຽນ, ນັກຮຽນຂອງທ່ານອາດຖືກຊັບຊ້ອນໂດຍຜູ້ອໍານວຍການໃນ IAES ເປັນເວລາຮອດ 45 ວັນທີ່ມີການເຂົ້າໂຮງຮຽນໂດຍບໍ່ຄໍານຶງວ່າພຶດຕິກໍາຖືກຕັດສິນວ່າແມ່ນການສະແດງເຖິງຄວາມພິການຂອງນັກຮຽນ ຫຼື ບໍ່. ທີມງານ IEP ຈະຕັດສິນວ່າ IAES ແລະ ການບໍລິການສຶກສາທີ່ເໝາະສົມຈະຖືກສະໜອງໃຫ້ນັກຮຽນໃນຂະນະທີ່ຜູ້ກ່ຽວຢູ່ໃນ IAES ຫຼື ບໍ່.

### 9.1 ການອຸທອນຕໍ່ຄໍາຕັດສິນຕໍ່ການປະຕິບັດວິໄນ

ຖ້າພໍ່ແມ່ບໍ່ເຫັນດີກັບຄໍາຕັດສິນກ່ຽວກັບການຊັບຊ້ອນນັກຮຽນຂອງຜູ້ກ່ຽວພາຍໃຕ້ຂໍ້ບັນຍັດທາງວິໄນ ຫຼື ບໍ່ເຫັນດີກັບການຕັດສິນແບບຊຸມນຸມ ຫຼື ຖ້າໜ່ວຍງານເຂດຄຸ້ມຄອງໂຮງຮຽນຄິດວ່າ ການຮັກສາການຊັບຊ້ອນປະຈຸບັນຂອງນັກຮຽນ ແມ່ນອາດເຮັດໃຫ້ບາດເຈັບຕໍ່ນັກຮຽນ ຫຼື ຄົນອື່ນ, ພໍ່ແມ່ ຫຼື ໜ່ວຍງານເຂດຄຸ້ມຄອງໂຮງຮຽນແມ່ນສາມາດອຸທອນຄໍາຕັດສິນໂດຍ ການສະເໜີຂໍການພິຈາລະນາ ກັບ BSEA ຕາມທີ່ອະທິບາຍໄວ້ກ່ອນໜ້ານັ້ນໃນເອກະສານສະບັບນີ້.

BSEA ຈະດໍາເນີນການພິຈາລະນາກ່ຽວກັບການຊັບຊ້ອນທາງວິໄນ ຫຼື ການຕັດສິນແບບຊຸມນຸມຕາມກໍານົດການແບບຮີບດ່ວນ.[21] ໃນລະຫວ່າງການອຸທອນການຊັບຊ້ອນທາງວິໄນ ຫຼື ການຕັດສິນແບບຊຸມນຸມ, ນັກຮຽນຕ້ອງຍັງຢູ່ໃນ IAES ຈົນກວ່າເຈົ້າໜ້າທີ່ພິຈາລະນາຈະຕັດສິນ ຫຼື ໄລຍະປະຕິບັດວິໄນໄດ້ສິ້ນສຸດ, ເວັ້ນແຕ່ວ່າພໍ່ແມ່ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຈະເຫັນດີກັບການຊັບຊ້ອນອື່ນ.

## 10. ສາມາດຊອກຫາກົດໝາຍ ແລະ ລະບຽບການ ແລະ ຂໍ້ມູນອື່ນໆທີ່ມີປະໂຫຍດຢູ່ບ່ອນໃດ?

### 10.1 ກົດໝາຍ ແລະ ລະບຽບການ

ທ່ານສາມາດເບິ່ງເອກະສານເຕັມຂອງກົດໝາຍການສຶກສາພິເສດຂອງລັດໃນກົດໝາຍທົ່ວໄປຂອງ Massachusetts ໝວດ 71B. ກົດໝາຍຂອງລັດແມ່ນຮູ້ຈັກໂດຍທົ່ວໄປວ່າ "ໝວດ 766". ລະບຽບການກ່ຽວກັບການສຶກສາພິເສດຂອງລັດແມ່ນມີຢູ່ໃນປະມວນລະບຽບການຂອງ Massachusetts (Code of Massachusetts Regulations, CMR) ໃນ 603 CMR 28.00. ກົດໝາຍ ແລະ ລະບຽບການ ແລະ ຊັບພະຍາກອນອື່ນໆທີ່ມີປະໂຫຍດແມ່ນມີຢູ່ໃນເວັບໄຊຂອງ DESE.[22]

ກົດໝາຍການສຶກສາພິເສດຂອງລັດຖະບານກາງແມ່ນກົດໝາຍວ່າດ້ວຍການສຶກສາຂອງບຸກຄົນທີ່ມີຄວາມພິການ (Individuals with Disabilities Education Act) ເຊິ່ງເອີ້ນວ່າ "IDEA". ກົດໝາຍຂອງລັດຖະບານກາງ ແມ່ນມີຢູ່ໃນປະມວນກົດໝາຍສະຫະລັດ (United States Code) ໃນ 20 U.S.C. § 1400. ການປະຕິບັດລະບຽບການສໍາລັບ IDEA ແມ່ນມີຢູ່ໃນປະມວນລະບຽບການຂອງລັດຖະບານກາງ (Code of Federal Regulations, CFR) ໃນໝວດ 34, ມາດຕາ 300. ສໍາເນົາກົດໝາຍ ແລະ ລະບຽບ

---

[21] ໃຫ້ເບິ່ງກົດລະບຽບກ່ຽວກັບການພິຈາລະນາຂອງ BSEA II.C. ການພິຈາລະນາແບບຮີບດ່ວນ. ໜ້າ.7.

ການຂອງລັດຖະບານກາງ ແລະ ຂໍ້ມູນອະທິບາຍແມ່ນມີຢູ່ໃນເວັບໄຊຂອງ ກະຊວງສຶກສາ ສະຫະລັດ ທີ່ http://idea.ed.gov/.

### 10.2 ແບບຟອມ ແລະ ຄຳແນະນຳກ່ຽວກັບຂະບວນການຂອງຫຼັກສູດການສຶກສາແບບລາຍບຸກຄົນ

ພາບລວມທົ່ວໄປກ່ຽວກັບວິທີດຳເນີນຂະບວນການທາງການສຶກສາພິເສດ (ຄັດມາຈາກຄຳແນະນຳ IEP ທີ່ກຽມໂດຍ USDOE) ແມ່ນມີຢູ່ໃນ https://www.doe.mass.edu/specialeducation/iep/default.html.

ສຳລັບຄຳອະທິບາຍຂອງ DESE ກ່ຽວກັບການສ້າງ IEP, ໃຫ້ເບິ່ງຄຳແນະນຳກ່ຽວກັບຂະບວນການ IEP ແລະ ແບບຟອມ IEP ແບບມາດຕະຖານແມ່ນມີຢູ່ໃນເວັບໄຊ DESE: https://www.doe.mass.edu/specialeducation/iep/default.html.

### 10.3 ຕາຕະລາງຕົວອັກສອນຫຍໍ້

ວະລີທາງການສຶກສາພິເສດທີ່ພົບເຫັນຫຼາຍ ແມ່ນມີຕົວອັກສອນຫຍໍ້ ເຊິ່ງປະກອບມີຕົວອັກສອນຫຍໍ້ຂອງວະລີ. ເພື່ອຄວາມສະດວກຂອງທ່ານ, ຕົວອັກສອນຫຍໍ້ ແລະ ວະລີທີ່ໃຊ້ໃນເອກະສານສະບັບນີ້ແມ່ນມີຢູ່ລຸ່ມນີ້:

| | |
|---|---|
| BSEA: | Bureau of Special Education Appeals (ຫ້ອງການອຸທອນການສຶກສາພິເສດ) |
| CFR: | Code of Federal Regulations (ປະມວນລະບຽບການຂອງລັດຖະບານກາງ) |
| CMR: | Code of Massachusetts Regulations (ປະມວນລະບຽບການຂອງ Massachusetts) |
| DESE: | Massachusetts Department of Elementary and Secondary Education (ພະແນກປະຖົມສຶກສາ ແລະ ມັດທະຍົມສຶກສາ Massachusetts) |
| FAPE: | Free Appropriate Public Education (ການສຶກສາສາທາລະນະທີ່ເໝາະສົມທີ່ບໍ່ມີຄ່າໃຊ້ຈ່າຍ) |
| FBA: | Functional Behavioral Assessment (ການປະເມີນພຶດຕິກຳດ້ານໜ້າທີ່ການ) |
| IAES: | Interim Alternative Educational Setting (ສະຖານທີ່ທາງການສຶກສາທີ່ເປັນທາງເລືອກແບບຊົ່ວຄາວ) |
| IDEA: | Individuals with Disabilities Education Act (ກົດໝາຍວ່າດ້ວຍການສຶກສາຂອງບຸກຄົນທີ່ມີຄວາມພິການ) |
| IEE: | Independent Educational Evaluation (ການປະເມີນຜົນການສຶກສາແບບເອກະລາດ) |
| IEP: | Individualized Education Program (ຫຼັກສູດການສຶກສາແບບລາຍບຸກຄົນ) |
| PRS: | Problem Resolution System Office (ລະບົບແກ້ໄຂບັນຫາ) |

### 10.4 ຕາຕະລາງເວັບໄຊ

DESE ເຜີຍແຜ່ຂໍ້ມູນລະອຽດສຳລັບພໍ່ແມ່ ແລະ ໜ່ວຍງານເຂດຄຸ້ມຄອງໂຮງຮຽນຢູ່ເວັບໄຊຂອງຕົນ. ເວັບໄຊເຫຼົ່ານີ້ປະກອບມີກົດໝາຍທີ່ກ່ຽວຂ້ອງ, ນະໂຍບາຍຂອງໜ່ວຍງານ ແລະ ເອກະສານທີ່ມີປະໂຫຍດ ທີ່ຈະອະທິບາຍກ່ຽວກັບຂະບວນການທາງການສຶກສາພິເສດ.

Autism Spectrum Disorder:

https://www.doe.mass.edu/specialeducation/families/links/autism.html

Bureau of Special Education Appeals:

https://www.mass.gov/bsea-decisions-and-rulings

https://www.mass.gov/doc/hearing-rules-revised-july-2024/download

http://www.mass.gov/anf/hearings-and-appeals/bureau-of-special-education-appeals- bsea/mediation/

https://www.mass.gov/doc/bsea-mediation-brochure/download

https://www.mass.gov/info-details/frequently-asked-questions-about-mediation-at-the-bsea

https://www.mass.gov/info-details/learn-about-mediation-at-the-bsea

ການຍິນຍອມໃຫ້ເຂົ້າເຖິງ MassHealth (Medicaid):

ລະບຽບວິໄນ:

https://www.doe.mass.edu/sfs/discipline/?section=view-all

ກົດໝາຍວ່າດ້ວຍການສຶກສາຂອງບຸກຄົນທີ່ມີຄວາມພິການ:

http://idea.ed.gov/.

ຫຼັກສູດການສຶກສາແບບລາຍບຸກຄົນ:

https://www.doe.mass.edu/specialeducation/iep/default.html

ຄູ່ມືກ່ຽວກັບຂັ້ນຕອນສຳລັບຫຼັກສູດການສຶກສາແບບລາຍບຸກຄົນ
https://www.doe.mass.edu/specialeducation/iep/default.html

ການປະເມີນຜົນການສຶກສາແບບເອກະລາດ:

https://www.doe.mass.edu/specialeducation/policy/dese/advisories/2004-1.html

https://www.doe.mass.edu/specialeducation/policy/dese/advisories/memo-sy2024-2025-7.html

ການສັງເກດການກ່ຽວກັບຫຼັກສູດການສຶກສາໂດຍພໍ່ແມ່ ແລະ ຜູ້ມອບໝາຍຂອງເຂົາເຈົ້າເພື່ອຈຸດປະສົງໃນການປະເມີນຜົນ:

https://www.doe.mass.edu/specialeducation/policy/dese/advisories/2009-2ta.html

ລະບົບແກ້ໄຂບັນຫາ PRS ປຽບທຽບກັບຄຳຮ້ອງຮຽນຕາມຂະບວນການທາງກົດໝາຍຂອງ BSEA:

https://www.doe.mass.edu/prs/guide/default.html

ລະບົບແກ້ໄຂບັນຫາການບໍລິການຮັບປະກັນຄຸນນະພາບຂອງຫຼັກສູດ:

http://www.doe.mass.edu/prs/

ກົດໝາຍວ່າດ້ວຍການສຶກສາພິເສດ:

https://www.doe.mass.edu/lawsregs/statelaws.html

ລະບຽບການກ່ຽວກັບການສຶກສາພິເສດ:

https://www.doe.mass.edu/lawsregs/stateregs.html

ພໍ່ແມ່ຕົວແທນສຳລັບການສຶກສາພິເສດ:

https://www.doe.mass.edu/specialeducation/policy/dese/advisories/2013surrogateparent.html

ແບບຟອມສຳລັບການວາງແຜນເພື່ອການປ່ຽນແປງການສຶກສາພິເສດ:

https://www.doe.mass.edu/specialeducation/iep/default.html

ລະບຽບການກ່ຽວກັບບັນທຶກນັກຮຽນ:

http://www.doe.mass.edu/lawsregs/603cmr23.html

ຄໍາຖາມ ແລະ ຄໍາຕອບກ່ຽວກັບບັນທຶກນັກຮຽນ:

http://www.doe.mass.edu/lawsregs/advisory/cmr23qanda.html?section.

ການວາງແຜນເພື່ອການປ່ຽນແປງ:
https://www.doe.mass.edu/specialeducation/iep/transition/default.html